ຊຸດມໍລະດົກວຽງຈັນ

# ປະຫວັດ ພຣະເຈດີ
# ໂລກະຈຸລາມະນີ
# ຫຼື
# ພຣະທາດຫຼວງວຽງຈັນ



ຮຽບຮຽງ ໂດຍ ສີລາ ວີຣະວົງສ໌
ບັນນາທິການ ດວງເດືອນ ບຸນຍາວົງ

ດອກເກດ
DokkeD

ຊຸດນໍລະດົກວຽງຈັນ
ປະຫວັດພຣະເຈດີ ໂລກະຈຸລາມະນີ ຫຼື ພຣະທາດຫຼວງວຽງຈັນ

ຮຽບຮຽງ ໂດຍ ສີລາ ວີຣະວົງສ໌
ບັນນາທິການ ດວງເດືອນ ບຸນຍາວົງ

ຈັດໜ້າ ແລະອອກແບບປົກ:
ບໍລິສັດ ດອກເກດ ຈັດພິມຈໍາກັດ

ດອກເກດ
DokkeD
Publishing Co., Ltc

ຈັດພິມໂດຍ ສໍານັກພິມ ດອກເກດ
ພິມຄັ້ງທີ 2 ກັນຍາ 2010
ທະບຽນພິມເລກທີ:...........
ຈໍານວນ 3000 ຫົວ
ພິມທີ່ ພະໄຊ ກຣາບຟິກ
ນະຄອນຫຼວງວຽງຈັນ, ສ.ປ.ປ.ລາວ

ຈັດຈໍາໜ່າຍໂດຍ ບໍລິສັດ ດອກເກດ ຈັດພິມຈໍາກັດ
ໂທ: (+856 21) 263748, 020 2204895
e-mail: dokked@veetoo.net
www.dokked.com

ຂໍ້ມູນບັນນານຸກົມ ຂອງຫໍສະໝຸດແຫ່ງຊາດ
ສີລາ ວີຣະວົງສ໌, ມະຫາ
ປະຫວັດ ພຣະເຈດີ ໂລກະຈຸລາມະນີ / ສີລາ ວີຣະວົງສ໌, ມະຫາ.-- ວຽງຈັນ:
ດອກເກດ 2010
56 ໜ້າ: ພາບປະກອບ 21 ຊມ
1. ພະທາດຫຼວງ. 2. ລາວ -- ປະຫວັດສາດ. I. ຊື່ເລື່ອງ
959.4-dc21
ISBN 978-9932-07-012-1

ສາລະບານ

ຄຳນຳ ສຳນັກພິມ

ຄຳສະເໜີ ຜູ່ຂຽນ

ພາກ I ປະຫວັດພຣະເຈດີ ໂລກະຈຸລາມະນີ

1. ພຣະເຈົ້າຈັນທະບຸຣີ ປະສິດທິສັກ ທົງສ້າງທາດຫຼວງຄັ້ງແຣກ
2. ສົມເດັດພຣະເຈົ້າໄຊຍະເຊດຖາທິຣາດ ທົງສ້າງຕໍ່ມາ
3. ສິລາຈາລຶກ ຢູ່ບໍລິເວນພຣະທາດຫຼວງ(ຕົ້ນສິລາຈາລຶກ ພາສາລາວ
4. ການປະຕິສັງຂອນພຣະທາດຫຼວງ ໃນສະໄໝຕໍ່ມາ
5. ສະພາບຂອງທາດ ສະໄໝ ພ.ສ. 2410(ຄ.ສ.1867)
6. ສະພາບຂອງທາດຫຼວງໃນປັດຈຸບັນ
7. ຄວາມສັນນິຖານຂອງຜູ່ຂຽນ
8. ປະເພນີບຸນນະມັດສະການພຣະທາດຫຼວງ
9. ຄຳໄຫວ້ພຣະທາດ

ພາກ II : ຂໍ້ຄວາມເສີມ : ການບູລະນະເດີ່ນ ແລະ ພິທີການຈັດບຸນ ຫຼັງ ປີ 1975

# ຄຳນຳ ສຳນັກພິມ

ໃນປີ 2010 ນີ້ ມີການສະຫຼອງເຫດການສຳຄັນຫຼາຍຢ່າງຂອງປະເທດຊາດ ເຊັ່ນການສະຫຼອງນະຄອນຫຼວງວຽງຈັນຄົບຮອບ 450 ປີ. ສຳນັກພິມດອກເກດ ມີຄວາມພາກພູມໃຈຈັດພິມຄືນ "ປະຫວັດພຣະທາດຫຼວງວຽງຈັນ" ມໍລະດົກທາງວັດທະນະທັມທີ່ຕົກທອດມາແຕ່ບູຮານະການ.

ໃນເປີງບຸນ ມີຜູ່ຄົນມາມາກມາຍບຽດແທຍ້ກັນເຂົ້າມາທ່ຽວບຸນ ບາງກໍຊື້ດອກໄມ້ທູບທຽນເຂົ້າໄປ ຈູດໃຕ້ບູຊາພະເຈດີ ແຕ່ຖ້າຖາມວ່າ ເປັນຫຍັງຈຶ່ງມາໄຫວ້ພະທາດຫຼວງ ກໍມັກຈະໄດ້ຮັບຄຳຕອບແຕກຕ່າງກັນໄປແບບຂ້າງໆຄູງໆກໍມີ, ສະຫລູບແລ້ວ ບໍ່ມີຄຳຕອບທີ່ບົ່ງບອກວ່າມີຄວາມຮັບຮູ້ຢ່າງຖືກຕ້ອງກ່ຽວກັບທາດຫຼວງ ໂດຍສະພາະເລື່ອງທີ່ວ່າ ເປັນຫຍັງພະທາດຫຼວງຈຶ່ງເປັນທີ່ສັກກາລະບູຊາ ແລະເປັນປູຊະນີຍະສະຖານທີ່ສຳຄັນທາງສາສະໜາ.

ປື້ມນີ້ເຄີຍຈັດພິມມາແລ້ວແຕ່ປີ1969, ໃຫ້ຄຳອະທິບາຍຕາມຂໍ້ມູນຫຼັກຖານທາງບູຮານະຄະດີ ເອກະສານໃບລານບອກໃສ່ຂໍ້ສັນນິຖານວິນິດໄສຂອງຜູ້ຂຽນ, ມາຮອດປັດຈຸບັນ ປື້ມຫົວນີ້ ກໍກາຍເປັນສິ່ງຫາຍາກໄປແລ້ວ. ດັ່ງນັ້ນ ເພື່ອຕອບສະໜອງກັບຄຳຮຽກຮ້ອງຕ້ອງການຂອງຜູ້ອ່ານ ພວກເຮົາຈຶ່ງນຳຕົ້ນສະບັບມາຈັດພິມຄືນໂດຍບໍ່ໄດ້ດັດແປງໃຈຄວາມ ພຽງແຕ່ປ່ຽນວິທີສະກົດຄຳ ຕັດຄຳລາຊາສັບບາງສ່ວນອອກ ແລະໄດ້ຕື່ມຮູບແຜ່ນສີລາຈາລຶກ ຫຼັກຖານທາງບູຮານະຄະດີຕ່ອນສຳຄັນ ທີ່ມີອາຍຸທົ່ກັບນະຄອນຫຼວງວຽງຈັນ. ສິລາເລກແຜ່ນນີ້ ມື້ລາງທ່ານມະຫາສິລາວີຣະວົງສ໌ ໄດ້ອ່ານ ແຕ່ຊຸມປີ 1950, ເພິ່ນສະ

ແດງຄວາມຫວັງໄວ້ວ່າ ເມື່ອໃດມີການຍົກຍ້າຍອອກມາໄວ້ນອກກຳແພງ ສະດວກຕໍ່ການຖ່າຍຮູບ ຫຼືອັດສຳເນົາໄດ້ ກໍຈະນຳອອກມາໃຫ້ອ່ານກັນທົ່ວເຖິງແລະບັດນີ້ກໍຖືວ່າສົມດັ່ງຄວາມຕັ້ງໃຈຂອງທ່ານແລ້ວ.ນອກນີ້ສຳນັກພິມຍັງໄດ້ຂົນຂວາຍຊອກຫາຮູບພາບເກົ່າໆ ຂອງພຣະທາດຫຼວງແຕ່ລະຍຸກສະໄໝມາໃສ່ຕື່ມ. ເປັນດັ່ງນີ້ ປຶ້ມ "ປະຫວັດພຣະທາດຫຼວງ"ເຫຼັ້ມນີ້ກໍຄືງເປັນປຶ້ມທີ່ໄດ້ມາດຖານຄົບຖ້ວນ ເປັນຄູ່ມືການສຶກສາຄົ້ນຄວ້າການຮຽນການສອນໃນລະດັບຕ່າງໆ ໄດ້.

ຢ່າງໃດກໍດີ ການຈັດພິມຄັ້ງນີ້ ກໍເປັນພຽງການປະກອບສ່ວນເລັກໆນ້ອຍຂອງສຳນັກພິມ ດ້ວຍວ່າ ມີຂອດຈຳກັດດ້ານທຶນຮອນ ແຕ່ໃນອະນາຄົດ ພວກເຮົາກໍຈະພະຍາຍາມຂົນຂວາຍຈັດພິມປຶ້ມດີໆ ທີ່ມີຄຸນຄ່າທາງດ້ານພາສາ ວັດທະນະທຳວັນນະຄະດີແລະອື່ນໆ ຄືດັ່ງທີ່ໄດ້ເຮັດມາແລ້ວ ເຊັ່ນ ຮ່ວມມືກັບໂຮງພິມ, ຜູ້ຂຽນ ນັກປະພັນ, ເຈົ້າມູນລະສັດທາ ອົງການພັດທະນາ, ໂຄງການພຸດທະສາສະໜາເພື່ອການພັດທະນາ (ຄພພ) ເປັນຕົ້ນ.

ສຳນັກພິມດອກເກດຂໍຂອບໃຈ ບັນດາທ່ານທີ່ທັກທ້ວງຊີ້ບ່ອນຜິດ ສະກິດບ່ອນອ່ອນ ໃນການຈັດພິມປຶ້ມແຕ່ລະຫົວຂອງພວກເຮົາ. ຫວັງເປັນຢ່າງຍິ່ງວ່າ ໃນໂອກາດໜ້າທາງສຳນັກພິມ ຈະໄດ້ຮັບການສະໜັບສະໜູນແລະອຸປະກາລະຄຸນຈາກທ່ານຜູ້ຮູ້ຕື່ມອີກ ທັງນີ້ເພື່ອເຮັດໃຫ້ຜົນງານແຕ່ລະຫົວ ມີຄວາມຜິດພາດໜ້ອຍທີ່ສຸດ.

ວຽງຈັນ ວັນທີ ກັນຍາ 2010
ກອງບັນນາທິການ ສຳນັກພິມ ດອກເກດ

# ຄຳສະເໜີຂອງຜູ້ຂຽນ

ປະຫວັດຂອງພຣະທາດຫຼວງ ຫຼື ເຈດີໂລກະຈຸລາມະນີນີ້ ໄດ້ຂຽນ ຂຶ້ນຈາກຕຳນານ ແລະບັນທຶກຕ່າງໆຫຼາຍສະບັບຄື (1)ຕຳນານ **ອຸຣັງຄະນິທານ, (2)ຕຳນານນິທານຂຸນບູຣົມຣາຊາທິຣາດ** ຫຼື ພົງສາວະດານຊາດລາວ,(3) ບັນທຶກຂອງທ່ານວັນວຸດສະຕົບ, ອັກຄະລາຊະທູດຊາວໂຮນລັງ ທີ່ໄດ້ເຂົ້າມາວຽງຈັນແຕ່ປີ ຄ.ສ.1641, (5) ບັນທຶກຂອງຄະນະສຳຫຼວດແມ່ນ້ຳຂອງຄົນຊາດຝຣັ່ງ ເມື່ອປີ ຄ.ສ. 1867, (6) ບັນທຶກຂອງ ທ້າວພູວົງ ພົມມະສອນ, ອະດີດອະທິບໍດີກົມ ທຳມະການແລະ (7) ບັນທຶກຂອງພະຍາອະນົງລາຊະເສນາ ຜູ້ຮັກສາ ບູຮານວັດຖຸ ໃນນະຄອນວຽງຈັນ ເປັນຕົ້ນ.

ຕຳນານຕ່າງໆ ກ່ຽວກັບປະຫວັດພຣະທາດຫຼວງນີ້ ຕາມຄວາມປາກຄວາມເວົ້າຂອງຄົນເຖົ້າແກ່ເວົ້າວ່າ ເພິ່ນກໍ່ຕັນຮູນາກ ແລະລາງຄົນກໍເວົ້າວ່າເພິ່ນສ້າງບັນຈຸພະເກົສາທາດ(ເສັ້ນຜົມ)ຂອງພຣະພຸດທະເຈົ້າ ດັ່ງນີ້ກໍມີ. ແຕ່ຕາມຕຳນານທີ່ໄດ້ຄົ້ນຄວ້າມາແລ້ວນັ້ນ ບໍ່ເຫັນກ່າວເຖິງເລື່ອງທີ່ກ່າວນີ້ຈັກບ່ອນ ເຫັນມີກ່າວໄວ້ໃນໜັງສືອຸຣັງຄະທາດ ແຕ່ພຽງວ່າ "ເດີມນັ້ນ ແມ່ນພຣະເຈົ້າ ຈັນທະບຸຣີປະສິດທິສັກ ຜູ້ກໍ່ຕັ້ງວຽງຈັນຄົນທຳອິດ ເປັນຜູ້ສ້າງຂຶ້ນພ້ອມດ້ວຍພຣະອໍຣະຫັນ 5 ອົງ ໂດຍສ້າງບັນຈຸພຣະທາດ



*ໜັງສືຜູກໃບລານ ເລື່ອງ ອຸຣັງຄະທາດ*

ຫົວເນົ່າຂອງພຣະພຸດທະເຈົ້າ ທີ່ພຣະອໍຣະຫັນ 5 ອົງນັ້ນ ເອົາມາແຕ່ເມືອງລາຊະຄື. ຄັນຕໍ່ມາ ເມື່ອພຣະເຈົ້າໄຊຍະເຊດຖາທິຣາດ ລົງມາຕັ້ງວຽງຈັນຂຶ້ນເປັນນະຄອນຫຼວງຂອງປະເທດນັ້ນ ພຣະອົງຈຶ່ງໄດ້ສ້າງທາດຫຼວງນີ້ ຂຶ້ນອີກໃນປີ ພ.ສ. 2109 (ຄ.ສ.1566) ໂດຍກໍ່ກວມພຣະທາດເກົ່າລູກໜຶ່ງ ແລະທາດເກົ່າລູກນັ້ນ ຮຽກວ່າ **ທາດສຣີທັມມາໂສກະຣາດ**" ດັ່ງນີ້. ຕາມຂໍ້ຄວາມທີ່ກ່າວມານີ້ ຈຶ່ງອາດສັນນິຖານໄດ້ວ່າ ທາດເກົ່າທີ່ ພຣະເຈົ້າຈັນທະບຸຣີ ກັບພຣະອໍຣະຫັນສ້າງຂຶ້ນແຕ່ເດີມນັ້ນ ອາດຈະແມ່ນສ້າງຂຶ້ນແຕ່ໃນສະໄໝຂອງ**ພຣະເຈົ້າອະໂສກະຣາດ** ໃຫ້ສ້າງພຣະເຈດີ 84000 (ແປດໝື່ນສີ່ພັນ)ລູກໃນທົ່ວຊົມພູທະວີບ ນັ້ນກໍອາດເປັນໄດ້. ໃນການທີ່ສົມເດັດ ພຣະເຈົ້າໄຊຍະເຊດຖາທິຣາດ ທົງສ້າງພຣະທາດຫຼວງນັ້ນ ພຣະອົງໄດ້ມີອາຍາໃຫ້ຄວັດສີລາຈາລຶກໄວ້ເປັນຫຼັກຖານ ມີ 2 ແຜ່ນ ເປັນພາສາ

ບາລີ ແລະພາສາລາວ ທີ່ຝັງຢູ່ໃນກົມມະລຽນທາດຫຼວງ ທາງດ້ານຕາເວັນອອກທຸກວັນນີ້ (ປີ 1969). ຂ້າພະເຈົ້າ ມີຄວາມເສຍດາຍ ທີ່ບໍ່ໄດ້ນຳເອົາຄຳຈາລຶກຂອງພຣະເຈົ້າ ໄຊຍະເຊດຖາທິຣາດ ມາພິມໄວ້ໃນໜັງສືນີ້ໃຫ້ຄົບຖ້ວນໄດ້ ເພາະສິລາຈາລຶກ ແຜ່ນທີ 1 ທາງດ້ານຫຼັງ ເປັນຕົວໜັງສື ລາວ ແລະຄວາມລາວນັ້ນຢູ່ຕິດກົມມະລຽນ ເກີນໄປຈະນັ່ງ ລົງອ່ານບໍ່ໄດ້ ທັງຕົວໜັງສືກໍລຶບຫຼາຍ. ເວລາໃດ ທາງການ ຫາກໄດ້ຍ້າຍຫີນສິລາເລກນັ້ນອອກ ຫຼືແປງກົມມະລຽນ ບ່ອນນັ້ນແລ້ວຂ້າພະເຈົ້າຈະພະຍາຍາມໄປກ່າຍເອົາສິລາ ເລກນັ້ນມາພິມໃສ່ອີກ ໃນໂອກາດຂ້າງໜ້າ.

ຕຳນານປະຫວັດພຣະທາດຫຼວງສະບັບນີ້ ຂ້າພະ ເຈົ້າຂຽນຂຶ້ນຕາມໜັງສືຕ່າງໆກ່າວໄວ້ ດັ່ງໄດ້ກ່າວມາແລ້ວ ແຕ່ກໍເຊື່ອແນ່ວ່າຄົງຍັງບໍ່ຄົບຖ້ວນ ສະນັ້ນຖ້າທ່ານຜູ້ໃດ ໄດ້ຮູ້ເຫັນປະຫວັດພຣະທາດຫຼວງນີ້ ຢູ່ໃນໜັງສືເລື່ອງໃດ ທີ່ຕ່າງໄປຈາກນີ້ແລ້ວ ກະລຸນາແຈ້ງໃຫ້ຂ້າພະເຈົ້າຊາບ ດ້ວຍ ຈະເປັນບຸນຄຸນຢ່າງຍິ່ງ ໃນການທີ່ພາກັນຊ່ອຍຊອກ ຄົ້ນຫາຕຳນານ ພຣະທາດນີ້ໃຫ້ບໍລິບູນຕໍ່ໄປ.

ສິລາ ວີຣະວົງສ໌
ວຽງຈັນ ເດືອນ ຄ.ສ. 1969

## ພາກ I

# ປະຫວັດພຣະທາດຫຼວງວຽງຈັນ ຫຼື ພຣະເຈດີໂລກະຈຸລາມະນີ

### 1. ພຣະເຈົ້າຈັນທະບຸຣີປະສິດທິສັກ ທົງສ້າງທາດຫຼວງ ຄັ້ງແຣກ

ພຣະທາດຫຼວງ ຫຼື ພຣະເຈດີໂລກະຈຸລາມະນີ ອັນເປັນປູຊະນີຍະວັດຖຸ ສຳຄັນຍິ່ງແຫ່ງນະຄອນວຽງຈັນນີ້ ມີປະຫວັດກ່າວໄວ້ໃນໜັງສືອຸຣັງຄະ ນິທານ ຫຼື ອຸຣັງຄະທາດວ່າ ໄດ້ສ້າງຂຶ້ນໃນສະໄໝດຽວກັນກັບການຕັ້ງເມືອງ ວຽງຈັນຄັ້ງແຣກ ລຸນຫຼັງຈາກການສ້າງພຣະທາດພະນົມແລ້ວ. ຜູ່ສ້າງຄັ້ງທຳອິດແມ່ນພະເຈົ້າຈັນທະບຸຣີ ປະສິດທິສັກ ເຈົ້ານະຄອນວຽງຈັນຄົນທຳອິດ ພ້ອມກັບພະອໍຣະຫັນ 5 ອົງດັ່ງມີຂໍ້ຄວາມກ່າວໄວ້ໃນ ໜັງສືອຸຣັງຄະນິທານ ເຊິ່ງຂໍຄັດເອົາແຕ່ໃຈຄວາມສຳຄັນມາກ່າວໄວ້ໃຫ້ ຟັງດັ່ງນີ້:

"ເມື່ອພຣະໂຄດົມສຳມາສຳພຸດທະເຈົ້າປະຣິນິພານແລ້ວໄດ້ແປດປີປາຍ ພຣະມະຫາກັດສະປະເຖຣະ ໄດ້ນຳເອົາອຸຣັງຄະທາດ ຄືກະດູກຫົວອົກຂອງພຣະພຸດທະເຈົ້າມາປະດິດສະຖານໄວ້ທີ່ພູກຳພ້າ ເຊິ່ງຮຽກວ່າ ດອຍກະປະນະຄີຣີ(ຄື ທາດພະນົມ ທຸກວັນນີ້) ໃນເວລາກໍ່ຄັ້ງແຣກທີ່ພູ

ກໍ່ພ້ານັ້ນ ໄດ້ມີພຣະກະສັດທັງ 5 ນະຄອນ ມາຮ່ວມຊຸມນຸມກັນຄື:

1. ພຣະຍາສຸວັນນະພິງຄານ ເຈົ້າເມືອງໜອງຫານຫຼວງ
2. ພຣະຍາຄໍາແດງ ເຈົ້າເມືອງໜອງຫານນ້ອຍ
3. ພຣະຍານັນທະເສນ ເຈົ້າເມືອງມະຣຸກຂະນະຄອນ ຄືເມືອງທ່າແຂກເກົ່າ
4. ພຣະຍາອິນທະປັດຖະນະຄອນ ເມືອງອິນທະປັດຖະປະເທດຂະເໝນ
5. ພຣະຍາຈຸນລະນີພົມມະທັດ ເຈົ້າເມືອງແກວປະກັນ (ຄືແຂວງຊຽງຂວາງ)

ຕໍ່ມາເມື່ອພຣະຍາສຸວັນນະພິງຄານ ເມືອງໜອງຫານຫຼວງ ແລະພະຍາຄໍາແດງເມືອງໜອງຫານນ້ອຍ ສຸລະຄຸດຈຸຕິຕາຍໄປແລ້ວ ເລີຍເກີດນໍ້າຖ້ວມເມືອງທັງສອງໄຫຼລ່ວງເຖິງກັນ ຊາວເມືອງທັງສອງຈຶ່ງອົບພະຍົບ ໜີຂຶ້ນມາຕັ້ງຢູ່ ແຄມນໍ້າຂອງ. ໃນພວກອົບພະຍົບນີ້ ມີຊາຍຄົນໜຶ່ງຊື່ທ້າວຄໍາບາງ ເປັນນ້າບ່າວຂອງພຣະຍາສຸວັນນະພິງຄານເມືອງໜອງຫານຫຼວງ ໄດ້ພາບ່າວໄພ່ບໍລິວານຂຶ້ນມາຕັ້ງເມືອງໃໝ່ຢູ່ແຄມຫ້ວຍເກົ້າລ້ຽວ ໃກ້ແມ່ນໍ້າຂອງ ໃສ່ຊື່ເມືອງໃໝ່ນີ້ວ່າ ເມືອງສຸວັນນະພູມ. ສ່ວນບ່າວໄພ່ບໍລິວານ ກໍພາກັນແຍກຍ້າຍໄປຕັ້ງບ້ານຢູ່ອ້ອມແອ້ມເມືອງນັ້ນ. ໃນເວລານັ້ນ ມີຊາຍຄົນໜຶ່ງຊື່ ບຸຣີຈັນ ໄດ້ພາຍາດພີ່ນ້ອງມາຕັ້ງບ້ານ

ຢູ່ແຄມຮ່ອງແກປາກໜອງຄັນແທເສື້ອນ້ຳເຊິ່ງຮຽກວ່າບ້ານໜອງຄັນແທເສື້ອນ້ຳ. ໃນປາງນັ້ນມີພຣະອໍຣະຫັນສອງອົງໄດ້ມາໂຜດຊາວບ້ານໜອງຄັນແທ ອົງນຶ່ງຊື່ວ່າ ມະຫາພຸດທະວົງທ່ານຜູ່ນີ້ພັກເຊົາຢູ່ແຄມນ້ຳຂອງອີກອົງໜຶ່ງຊື່ ມະຫາສັດສະດີ, ທ່ານຜູ່ນີ້ພັກເຊົາຢູ່ປ່າໂພນ ເໜືອນ້ຳບຶງ(ອາດຈະແມ່ນບໍລິເວນທາດຝຸ່ນທຸກວັນນີ້). ບຸຣິຈັນ ຫົວໜ້າບ້ານໜອງຄັນແທໄດ້ເປັນຜູ່ອຸປະຖາກພຣະອໍຣະຫັນທັງສອງອົງ ນີ້.

ໃນສະໄໝດຽວກັນນີ້ທາງເມືອງສາເກດຕະນະຄອນ (ຄືເມືອງຮ້ອຍເອັດ) ກໍເກີດຄວາມວຸ່ນວາຍ ເນື່ອງດ້ວຍມີຂ້າເສິກຊາວເມືອງກຸຣຸນທະນະຄອນ ຄື ທວາຣາວະດີອະຍຸທະຍາ ຍົກມາຣາວີຮົບກວນ, ຊາວເມືອງສາເກດຕະນະຄອນຈຶ່ງແຕກໜີຂຶ້ນມາເພິ່ງທ້າວຄຳບາງ. ໝື່ນຫຼວງກາງໂຮງກັບໝື່ນນັນທະອາຣາມໄດ້ພາເອົາເຈົ້າສັງຂະວິຊາກຸມມານກັບຄົວບ່າວໄພ່ສອງແສນຄົນໜີຂຶ້ນມາ. ໃນເວລານັ້ນ ເຈົ້າສັງຂະວິຊາໄດ້ພາບ່າວໄພ່ແສນຄົນ ຕັ້ງຢູ່ບ້ານໜອງຄາຍແລະຢາຍມາຕາມຣິມຂອງ ຮອດຫ້ວຍບັງພວນ. ໝື່ນຫຼວງກາງໂຮງພາຄົວຫ້າໝື່ນມາຕັ້ງຢູ່ຫ້ວຍຄູຄຳ, ໝື່ນນັນທະອາຣາມ ພາຄົວຫ້າໝື່ນຄົນມາຕັ້ງຢູ່ແຄມຫ້ວຍນົກຍູງ ຫຼື ຫ້ວຍນ້ຳໂມງ ບໍລິເວນແຖວນີ້ ຈຶ່ງມີຄົນຢູ່ໜາແໜ້ນຕໍ່ມາ.

ຢູ່ຕໍ່ມາ ທ້າວບຸຣິຈັນ ຫົວໜ້າບ້ານໜອງຄັນແທມາໄດ້ກັບນາງອິນທະສວາງ ທິດາຂອງທ້າວຄຳບາງ ເຈົ້າເມືອງ

ສຸວັນນະພູມ ແລ້ວບຸຣິຈັນ ຈຶ່ງຕັ້ງບ້ານໜອງຄັນແທຂຶ້ນ ເປັນເມືອງ ຮຽກວ່າ ເມືອງຈັນທະບຸຣີ ຕາມນາມຂອງຕົນ. ຕັ້ງເມືອງຂຶ້ນແລ້ວຈຶ່ງຈັດແຈ່ງແຕ່ງເຄື່ອງລາຊະບັນນາການ ໄປຖວາຍພຣະເຈົ້າສຸມິດຕະທຳມະວົງ ພຣະເຈົ້າແຜ່ນດິນ ແຫ່ງເມືອງມະຣຸກຂະນະຄອນ(ຄືເມືອງທ່າແຂກ ຫຼື ສີໂຄດ ຕະບູນ) ອົງເປັນເຈົ້າແຜ່ນດິນເອກະລາດ. ພຣະເຈົ້າສຸມິດ ຕະທຳມະວົງຈຶ່ງແຕ່ງໃຫ້ພານ 5 ຄົນ ຂຶ້ນມາ ອະພິເສກ ບຸຣິຈັນ ໃຫ້ເປັນເຈົ້າຄອງນະຄອນຈັນທະບຸຣີ ມີພະນາມວ່າ ພຣະເຈົ້າຈັນທະບຸຣີປະສິດທິສັກ. ພ້ອມກັນນີ້ຍັງໄດ້ພະລາ ຊະທານນາງກັນລະຍານີ ທີ່ເປັນເຊື້ອຊາດແຂກ(ຂອມ) ມາໃຫ້ສອງນາງ ແລ້ວພຣະເຈົ້າສຸມິດຕະທຳມະວົງ ຈຶ່ງກຳ ນົດເຂດແດນເມືອງຈັນທະບຸຣີ ຄືໃຫ້ທາງໃຕ້ນັບ ແຕ່ນ້ຳກະ ດິງຂຶ້ນມາ ແລະທາງຟາກນ້ຳຂອງ ນັບແຕ່ຫ້ວຍບາງບາດ ຂຶ້ນມາ.

ບຸຣິຈັນ ເມື່ອໄດ້ເປັນເຈົ້າຄອງນະຄອນແລ້ວ ຈຶ່ງສ້າງ ຂົວຂ້າມນ້ຳບຶງ ອອກໄປຫາບ້ານເກົ່າ ແລະສ້າງວັດຂຶ້ນມາ ໃນບ້ານເກົ່ານັ້ນຮຽກວ່າວັດສວນ ອ່ວຍລ່ວຍແຫ່ງນຶ່ງ, ສ້າງ ວິຫານຂຶ້ນອີກ 2 ຫຼັງ ທີ່ປ່າໃຕ້ແລະປ່າເໜືອ ສຳລັບໃຫ້ພຣະ ອໍຣະຫັນ 2 ອົງນັ້ນຢູ່, ຕໍ່ມາ ພຣະມະຫາພຸດທະວົງ ຈຶ່ງໄປ ນຳຂໍເອົາທາດພຣະອໍຣະຫັນ ມາບັນຈຸໄວ້ໃນວັດປ່າມະຫາ ພຸດທະວົງ ໄດ້ກົ່ນດິນລົງເລິກ 5 ວາ ກວ້າງ 3 ວາ ກໍ່ດ້ວຍ ດິນຈີ່ ເປັນຮູບຜາສາດ ເອົາແຜ່ນເງິນລຽງປູຮອງໄວ້ ຈຶ່ງເອົາ

ທາດລົງບັນຈຸ ແລ້ວເອົາຫີນໝາກ ຄອນຖົມໃຫ້ແໜ້ນ ແລະ ຝັງສິລາໝາຍໄວ້ ສິລານັ້ນສູງ 3 ວາ ກວ້າງ1 ວາ"

ໃນການຕໍ່ມາຈຶ່ງມີພຣະອໍຣະຫັນ 5 ອົງ ໄດ້ນຳເອົາພຣະບໍລົມມະທາດຂອງ ພຣະພຸດທະເຈົ້າ ມາຈາກເມືອງລາຊະຄື ປະເທດອິນເດງ ພຣະທາດທີ່ນຳມານັ້ນຄື ພຣະທາດຫົວເນົ່າ 27 ອົງ, ທາດແຂ້ວຝາງ 7 ອົງ, ທາດຝ່າຕີນຂວາ 9 ອົງ. ເວລາພຣະອໍຣະຫັນ 5 ອົງມານັ້ນ ໄດ້ຜ່ານກາຍທາງ ເມືອງລະໂວ້(ລົບບຸລີ)ແລະເມືອງໂຄຣາດ ເພິ່ນໄດ້ເອົາພຣະບໍຣົມທາດ ໄປ ບັນຈຸໄວ້ໃນທີ່ຕ່າງໆດັ່ງນີ້:

- ພຣະທາດຫົວເນົ່າ ບັນຈຸໄວ້ທີ່ພູເຂົາຫຼວງ ຫຼື ພູເຂົາລວງ (ເຂົ້າໃຈວ່າແມ່ນທາດຫຼວງນີ້ເອງ ເພາະໃນສິລາຈາລຶກທາດຫຼວງ ຮຽກວ່າ ຄູຍທະຖູປາໂຍ ແປວ່າທາດທີ່ລັບຄືດູກຫົວເນົ່າ ແຕ່ໃນໜັງສືຕຳນານ ພຣະທາດບັງພວນຢູ່ບ້ານຫ້ວຍບັງພວນ ຈັງຫວັດໜອງຄາຍ ທີ່ຂຽນເປັນອັກສອນທັມ ຮຽກວ່າ ພູເຂົາລວງ, ຄຳວ່າ ລວງແປວ່ານາກດັ່ງນັ້ນ ຄຳວ່າ ພູເຂົາລວງ ອາດຈະແປວ່າ ໂພນນາກ ຫຼືວ່າໂພນຂຶ້ນາກ ກໍໄດ້)
- ທາດ(ດູກ-ອັດຖິ)ຝ່າຕີນຂວາ ບັນຈຸໄວ້ທີ່ເມືອງຫຼ້າໜອງຄາຍ (ທາດໜອງຄາຍພັງລົງນ້ຳແລ້ວ)
- ທາດ(ດູກ)ແຂ້ວຝາງ ບັນຈຸໄວ້ທີ່ວຽງງົວ ແລະທ່າທຳແພ (ເຂົ້າໃຈວ່າແມ່ນບ້ານພະໂຄວຽງຄຸກ ຄືທາດບັງພວນ ທຸກວັນນີ້)

ໃນການບັນຈຸພຣະທາດຫົວເນົ່າ 27 ອົງ ໄວ້ທີ່ພູເຂົາຫຼວງນັ້ນພຣະເຈົ້າຈັນທະບຸຣີປະສິດທິສັກເຈົ້ານະຄອນວຽງຈັນໄດ້ເປັນປະທານ, ພຣະອົງໄດ້ໃຫ້ກໍ່ອຸໂມງຫີນກວມໄວ້ເຕົ້າຝາອຸໂມງທັງສີ່ດ້ານນັ້ນກວ້າງ ດ້ານລະ 5 ວາ ແລະໜາ 2 ວາ ລວງສູງໄດ້ 4 ວາ 3 ສອກ. ເມື່ອໄດ້ທຳການບັນຈຸພຣະບໍຣົມມະທາດແລ້ວ ພຣະເຈົ້າຈັນທະບຸຣີ ຈຶ່ງໄດ້ມີອາຍາໃຫ້ເສນາອາມາດສ້າງວິຫານຂຶ້ນໃນວຽງຈັນ 5 ຫຼັງ ເພື່ອໃຫ້ເປັນທີ່ຢູ່ຈຳວັດສາຂອງພຣະອໍຣະຫັນ 5 ອົງນັ້ນ. ຄັນຕໍ່ມາ ພຣະອໍຣະຫັນ 2 ອົງ ທີ່ຢູ່ກ່ອນນັ້ນຄື ພຣະມະຫາ ພຸດທະວົງ ທີ່ຢູ່ວັດປ່າມະຫາພຸດທະວົງ ແລະພຣະມະຫາສັດສະດີ ກໍເຖິງແກ່ການນິບພານໄປ ພຣະເຈົ້າຈັນທະບຸຣີໄດ້ກະທຳການຊາປະນະກິດສຳເລັດແລ້ວຈຶ່ງໄດ້ເອົາອັດຖິທາດຂອງພຣະອໍຣະຫັນ 2 ອົງ ນັ້ນມາບັນຈຸໄວ້ໃນວັດ ສວນອ່ວຍລ່ວຍ ທີ່ພຣະອົງໄດ້ສ້າງໄວ້ແຕ່ກ່ອນ."

ປະຫວັດການສ້າງພຣະທາດຫຼວງຄັ້ງແຮກ ຕາມທີ່ກ່າວໄວ້ໃນໜັງສືອຸຣັງຄະນິທານຫຼືອຸຣັງຄະທາດມີຂໍ້ຄວາມພຽງທໍ່ນີ້ ແລະຕາມປະຫວັດນີ້ ພຣະທາດຫຼວງອົງເດີມຫຼືອົງທຳອິດທີ່ ພຣະຍາຈັນທະບຸຣີ ສ້າງນີ້ສູງແຕ່ ພຽງ 4 ວາ 3 ສອກ ກວ້າງດ້ານລະ 4 ວາ ທໍ່ນັ້ນ ແລະພຣະທາດລູກ ນີ້ ສ້າງບັນຈຸພຣະທາດຫົວເນົ່າ ຄືກະດູກໂມມຂອງພຣະພຸດທະເຈົ້າ ເຊິ່ງພະອໍຣະຫັນ 5 ອົງ ໄດ້ນຳມາແຕ່ເມືອງລາຊະຄືປະເທດອິນເດຍ.

## 2. **ສົມເດັດພຣະເຈົ້າໄຊຍະເຊດຖາທິຣາດ ທົງສ້າງພະທາດ ຫຼວງຕໍ່ມາ(ພ.ສ. 2109 ຫຼື ຄ.ສ. 1566)**

ປະຫວັດການສ້າງນະຄອນວຽງຈັນ ແລະພຣະທາດຫຼວງວຽງຈັນ ແຕ່ດັ້ງເດີມນັ້ນແມ່ນ ພຣະເຈົ້າຈັນທະບຸຣີປະສິດທິສັກ(ບຸຣີຈັນອ່ວຍລ່ວຍ) ແລະຄົງໄດ້ສ້າງຂຶ້ນແຕ່ໃນລະຫວ່າງພຸດທະສັກລາດ 236 ດັ່ງໄດ້ກ່າວມາແລ້ວ ແຕ່ໃນສະໄໝຕໍ່ມາ ຊື່ຂອງນະຄອນວຽງຈັນ ກໍບໍ່ໄດ້ຜາກົດໃນໜັງສືເລື່ອງໃດອີກ ທັງຄວາມສຳຄັນຂອງວຽງຈັນ ຕະຫຼອດເຫດການບ້ານເມືອງ ໃນເຂດແຂວງນີ້ ກໍບໍ່ມີເລື່ອງໃດກ່າວເຖິງ. ແຕ່ເຖິງຢ່າງນັ້ນກໍຕາມ ເມືອງວຽງຈັນກໍຍັງຄົງເປັນເມືອງຢູ່ຕໍ່ມາ ເພາະວ່າໃນລະຫວ່າງປີ ພ.ສ. 1828 (ຄ.ສ.1285) ເມື່ອຂຸນຣາມຄຳແຫງໄດ້ຂຶ້ນເປັນເຈົ້າແຜ່ນດິນ ໃນເມືອງສຸໂຂໄທແລ້ວ ພຣະອົງໄດ້ເຮັດສິລາຈາລຶກບອກເຂດແດນເມືອງສຸໂຂໄທ ໄວ້ວ່າ **"ເຂດແດນເມືອງສຸໂຂໄທນີ້ ດ້ານຕາເວັນອອກເຖິງເມືອງວຽງຈັນ ແລະວຽງຄຳ ເປັນທີ່ແລ້ວ"** ດັ່ງນີ້ ຕາມຈາລຶກນີ້ ເປັນເວລາກ່ອນທີ່ພະຍາຟ້າງຸ່ມລົງມາຕີໄດ້ວຽງຈັນ ແລະວຽງຄຳ ເຖິງ 72 ປີ. ສະນັ້ນ ຈຶ່ງເປັນອັນຮູ້ໄດ້ວ່າ ວຽງຈັນແລະວຽງຄຳນີ້ ເປັນເມືອງເກົ່າທີ່ມີຊື່ມາແລ້ວ ແຕ່ບູຮານນັບເປັນພັນໆປີ ທັງມີເຈົ້າເປັນຜູ່ປົກຄອງສືບຕໍ່ກັນມາ ຫາກແຕ່ບໍ່ຜາກົດໄດ້ເປັນເມືອງເອກະລາດ ຫຼືເມືອງຫຼວງຂອງປະເທດ ແຕ່ຄົງເປັນ

ເມືອງມີອິດສະລະສ່ວນໜຶ່ງ ດັ່ງຈະຂໍນຳເອົາລາຍຊື່ຂອງຜູ່ເປັນເຈົ້າວຽງຈັນ ຕາມທີ່ສືບຮູ້ໃນປະຫວັດສາດ ນັບແຕ່ໄລຍະ ພຣະເຈົ້າຟ້າງຸ່ມ ລົງມາມີດັ່ງນີ້ .

1. ທ້າວຊຽງມຸງ ເປັນເຈົ້ານະຄອນວຽງຈັນ ພ.ສ.1899 ກົງກັບ ຄ.ສ.1356

2. ພຣະເຈົ້າຟ້າງຸ່ມ ຕີວຽງຈັນໄດ້ແລ້ວໄດ້ຕັ້ງໃຫ້ ບາຄຸ້ມເປັນ ໝື່ນຈັນແລະເປັນເຈົ້າວຽງຈັນແທນທ້າວຊຽງມຸງ (ຄ.ສ.1357)

3. ທ້າວວັງບຸຣີ ໂອລົດຂອງພຣະຍາສາມແສນໄທໄດ້ຮັບຕຳແໜ່ງເປັນພຣະຍາເມືອງຂວາ ຄອງນະຄອນວຽງຈັນໃນລະຫວ່າງ ພ.ສ.1960 ກົງກັບ ຄ.ສ.1427

4. ເຂົ້າຊາຍມຸ່ຍ (ໂອລົດຂອງໃຜບໍ່ຊາບ) ເປັນເຈົ້າວຽງຈັນໃນໄລຍະນຶ່ງ

5. ພະຍາຈັນທາງອກ(ຫຼານພຣະເຈົ້າໄຊຍະຈັກກະພັດ) ປົກຄອງວຽງຈັນ ໃນລະຫວ່າງ ພ.ສ. 2022 ກົງກັບ ຄ.ສ.1479.

6. ພຣະຍາແສນສຸຣິນທະລືໄຊ (ທ່ານຜູ່ນີ້ ເປັນຄົນເມືອງໜອງຄາຍ ພາຍລຸນມາໄດ້ເປັນ ເຈົ້າແຜ່ນດິນວຽງຈັນ ສືບຕໍ່ຈາກ ພຣະເຈົ້າໄຊຍະເຊດຖາທິຣາດ) ພ.ສ. 2029

7. ພຣະຍາສີສັດທັມມະໄຕໂລກ, ພ.ສ. 2093, ທ່ານຜູ່ນີ້ໄດ້ສ້າງວັດ ຈັນທະບຸຣີ ແລະເພຍວັດ

ບຸກຄົນຜູ່ເປັນເຈົ້າວຽງຈັນແຕ່ສະໄໝພຣະຍາຟ້າງຸ່ມ ລົງມາເຖິງພຣະ ເຈົ້າໄຊຍະເຊດຖາທິຣາດ ມີ 7 ຄົນທໍ່ນີ້ ແລະ ບັນດາທ່ານເຫຼົ່ານີ້ບໍ່ເຫັນກ່າວໄວ້ວ່າໄດ້ທຳການສ້ອມແປງ ທາດໜ່ວຍໃດໜ່ວຍຫນຶ່ງເລີຍ. ຕໍ່ມາ ເມື່ອ ພ.ສ. 2103 (ຄ. ສ.1560) ສົມເດັດພຣະເຈົ້າໄຊຍະເຊດຖາທິຣາດໄດ້ລົງ ມາຕັ້ງນະຄອນວຽງຈັນ ຂຶ້ນເປັນນະຄອນຫຼວງຂອງປະເທດ ໃສ່ຊື່ວ່າ "ນະຄອນຈັນທະບຸຣີສີສັດຕະນາຄະນະຫຸ ຕະອຸຕ ມະຣາຊະທານີ " ແລ້ວເຖິງປີ ພ.ສ. 2109(ຄ.ສ.1566) ພຣະອົງຈຶ່ງໄດ້ສ້າງທາດຫຼວງຂຶ້ນໃນພຣະລາຊະອຸທິຍານ ດ້ານຕາເວັນອອກຂອງເມືອງ ໂດຍກໍ່ກວມພະທາດເກົ່າລູກ ໜຶ່ງທີ່ມີມາແຕ່ບູຣານ.

ໃນການສ້າງພຣະທາດໃໝ່ ກໍ່ກວມພຣະທາດເກົ່ານີ້ ພຣະອົງໄດ້ສ້າງ ທາດນ້ອຍອ້ອມເຕົ້າທາດໃຫຍ່ 30 ລູກ ຮຽກວ່າ ສະມະຕິງສະປາຣະມີ ຄື ເຮັດໃຫ້ຄົບຈຳນວນ ປາຣະມີ 30 ປະການຂອງ ພຣະພຸດທະເຈົ້າ ນັບແຕ່ ທານະ ປາຣະມີ ແລະທານະປະຣະມັດຖະປາຣະມີເປັນຕົ້ນ. ພາຍ ໃນທາດນ້ອຍ 30 ລູກນີ້ ພຣະອົງໄດ້ເອົາທອງຄຳ ຫຼໍ່ເປັນ ລູກທາດ ລູກໃດໜັກສີ່ບາດບັນຈຸໄວ້ທຸກໆໜ່ວຍທາດ ແລະ ມີໃບລານເຮັດດ້ວຍຄຳຍາວປະມານສອກກຳ ຈາລຶກ ພະທັມ ຮອງລູກທາດນັ້ນໄວ້ທຸກໆໜ່ວຍ. ຂໍ້ຄວາມທີ່ຈາລຶກ ຢູ່ໃນໃບລານນັ້ນເ ປັນພາສາບາລີວ່າດັ່ງນີ້:

"ເຍ ທັມມາ ເຫຕຸປະ ປພະວາ

ເຕສັງ ເຫຕຸງ ຕະຖາຄະໂຕ
ເຕສັຍຈະ ໂຍ ນິໂຣໂທຈະ
ເອວັງ ວາທີ ມະຫາ ສະມະໂນ"
ແປວ່າ: ສິ່ງທັງຫຼາຍເກີດມາຈາກເຫດ ພະຕາຄົດເຈົ້າ
.......

ຂໍ້ຄວາມນີ້ ນັກປາດອາຈານຝ່າຍພຣະພຸດທະສາສະໜາຖືວ່າ ເປັນຫົວໃຈຂອງຄຳສອນແຫ່ງ ພຣະພຸດທະສາສະໜາ. (ລູກທາດແລະໃບລານຄຳນີ້ ຂຸດພົ້ໃນປີ ຄ.ສ. 1930 ເມື່ອທຳການສ້ອມແປງພະທາດ ດັ່ງຈະກ່າວຂ້າງໜ້າ)

ເມື່ອສ້າງແລ້ວ ພຣະອົງໄດ້ໃສ່ຊື່ພຣະທາດ ຫຼື ພຣະເຈດີລູກນີ້ວ່າ "ເຈດີໂລກະຈຸລາມະນີ" ແຕ່ທຸກວັນນີ້ ຄົນທັງຫຼາຍຮຽກວ່າ ທາດຫຼວງ. ຄຳວ່າ ທາດຫຼວງ ນັ້ນຄົງຈະໝາຍຄວາມວ່າທາດໃຫຍ່ ນັ້ນເອງ ແລ້ວໄດ້ສະຫຼະຂ້ອຍຂ້າທາສາ ແລະທີ່ດິນໄວ້ໃຫ້ເປັນຂອງພຣະທາດເປັນອັນມາກ ດັ່ງມີແຈ້ງຢູ່ໃນສິລາເລກ ທີ່ພະອົງຝັງໄວ້ໃນບໍລິເວນພະທາດນີ້.

## 3. ສິລາຈາລຶກ ການສ້າງພຣະທາດຫຼວງ

ສິລາເລກນັ້ນມີ 2 ແຜ່ນໆຫນຶ່ງໜ້າດ້ານຫນຶ່ງ ຈາລຶກເປັນພາສາບາລີ ຕອນໃຕ້ເປັນພາສາລາວ ອີກດ້ານໜຶ່ງເປັນພາສາລາວທັງໝົດ ແລະແຜ່ນທີ 2 ມີຕົວອັກສອນແຕ່ດ້ານດຽວເປັນພາສາລາວຄືກັນມີເນື້ອຄວາມຕໍ່ຈາກແຜ່ນທີ 1 ຕົວອັກສອນທີ່ຈາລຶກນັ້ນເປັນອັກສອນທັມ.

ແຜ່ນສິລາເລກທັງສອງນີ້ ເວລານີ້ຝັງຢູ່ປະຕູດ້ານຕາເວັນອອກພາຍໃນບໍລິເວນແຄມກົມມະລຽນ ແຕ່ວ່າທັງສອງແຜ່ນແຕກວາກ ແລະລຶບໄປ ຫຼາຍບ່ອນແລ້ວ ຈຶ່ງອ່ານບໍ່ໄດ້ຄວາມຕິດຕໍ່ກັນ ເນື່ອງຈາກສິລາເລກແຜ່ນ ທີ 1 ນັ້ນໄດ້ຝັງໄວ້ໃກ້ກົມມະລຽນເກີນໄປ ສະນັ້ນທາງດ້ານຫຼັງ ທີ່ຢູ່ແປະກົມມະລຽນນັ້ນຈຶ່ງອ່ານບໍ່ໄດ້ ອ່ານໄດ້ຈຳເພາະດ້ານໜ້າອັນເປັນພາສາ ບາລີ ມີຕົວອັກສອນແລະຂໍ້ຄວາມວ່າດັ່ງນີ້:





ຄຳແປ:

1. ໄດ້ຝັງຣືກ ໃນມື້ເພັງ ເດືອນອ້າຍ ຈຸລະສັກຣາດ 928

2. ພຣະສະຖູບນີ້ ຊື່ວ່າ ໂລກະຈຸລາມະນີ ເປັນສະຖູບຂອງພຣະພຸທເຈົ້າ ແມ່ນພຣະມະຫາຣາຊອົງທົງ ພຣະນາມວ່າ ໄຊຍະເຊດຖາທິຣາດ ໃຫ້ສ້າງໄວ້

3. ຂໍນ້ອມໄຫວ້ພຣະຣັຕຕະນະໄຕຣ.... (ຫີນລືບອ່ານບໍ່ອອກ)............... ນີ້ເຖິງແມ່ນ ບໍ່ມີຜົວ (ຫຼືບໍ່ມີເຈົ້າຂອງ) ອັນພຣະມະຫາຣາຊໄຊຍະເຊດຖາ ໄດ້ຖວາຍໄວ້ແກ່ພຣະທາດ ທີ່ລັບຂອງ ພຣະພຸທເຈົ້າ ຈົນຕາບເທົ້າ 5 ພັນວັດສາ.

4. ບຸກຄົນຜູ່ໃດຜູ່ໜຶ່ງທີ່ເປັນຜູ່ອຸປະຖາກພຣະທາດ ຢູ່ໃນບ່ອນຕັ້ງ ພຣະທາດນີ້ ຖືເອົາຍິງເຫຼົ່ານີ້ເຮັດເມຽ ກໍຈົ່ງເອົາຜູ່ໃດປະສົງ ຈະຢູ່ທີ່ນີ້ ຖືເອົາຂ້ອຍຍິງຂ້ອຍຊາຍ ອັນເປັນກະກູນຂອງເຮົາແລ້ວ ຈົ່ງຢູ່ໃນທີ່ອຸປະຖາກ......(ລືບ) ມັນຜູ່ນັ້ນ ມາຂໍຂະມາດ້ວຍສິ່ງຂອງອັນລັກ(ນັ້ນ) ເຮົາບໍ່ໃຫ້ຂະມາ ແມ່ນຈະຊື້ດ້ວຍສິ່ງຂອງອັນມີຄ່າປະມານທໍ່ເຂົາສິເນຣຸເຮົາກໍບໍ່ໃຫ້ ກໍຜູ່ໃດ .... (ຫີນແຕກ) ໃນທີ່ນີ້ ...(ອ່ານບໍ່ອອກ) ຜູ່ນັ້ນຈົ່ງມອບຕົນໃຫ້ເປັນທາດ ແກ່ພຣະສະຖູບເໝືອນກັບເຮົາ ຜູ່ອຸປະຖາກທາດທີ່ລັບ ທີ່ເອົາກະກູນ ນີ້ຂອງເຮົາແລ້ວ ຈົ່ງຢູ່ໃນທີ່ອຸປະຖາກພຣະທາດ.



ຮູບສິລາເລກທັງສອງ(ເຂົ້າປະຕູຕາເວັນອອກ): ພາບຖ່າຍ ວັນທີ 13 ສິງຫາ 2010





ແຜ່ນດ້ານຊ້າຍມື: ສູງ: 98 cm,  ກວ້າງ: 73 cm

ແຜ່ນດ້ານຂວາມື:ສູງ:116  cm; ກວ້າງ: 97,5 cm; ໜາ: 20 cm.





ໝາຍເຫດຈາກກອງ ບ.ກ. ປັດຈຸບັນ(ປີ2010)ແຜ່ນສິລາເລກທັງສອງ ຖືກນຳມາຕິດຕັ້ງຢູ່ ຂ້າງປະຕູເຂົ້າດ້ານຕາເວັນອອກ ໂດຍມີຫຼັງຄາມຸງ ກັນແດດ ທີ່ບໍ່ສາມາດປົກປ້ອງຈາກຄວາມຊຸ່ມອື່ນຂອງນ້ຳຝົນໄດ້ ສົມຄວນນຳເອົາໄປຕັ້ງໄວ້ໃນກົມມະລຽນ ເຊັ່ນດຽວຮູບຄວັດພະເຈົ້າ ໄຊຍະວໍຣະມັນ ແລະຖ່າຍຮູບຈາລຶກອັກສອນພ້ອມດ້ວຍຄຳແປອອກໄວ້ ໃຫ້ຜູ້ຄົນໄດ້ອ່ານ ແລະບູຊາເພາະເປັນບູຮານວັດຖຸເກົ່າຕ່ອນໜຶ່ງ ທີ່ມີ ອາຍຸມາແຕ່ສະໄໝພຣະເຈົ້າໄຊຍະເຊດຖາທິຣາດ ແທ້.

ສົມເດັດພຣະໄຊຍະເຊດຖາທິຣາດເຈົ້າ ເມື່ອໄດ້ສ້າງພະທາດໂລກະຈຸລາມະນີນີ້ ແລ້ວພຣະອົງຍັງໄດ້ສ້າງວັດຕ່າງໆຂຶ້ນອີກຫຼາຍວັດແລະໄດ້ສ້ອມແປງພຣະທາດທີ່ເກົ່າອີກຫຼາຍໜ່ວຍ ຕາມທີ່ຜາກົດໃນພົງສາວະດານມີ:

1. ສ້າງວັດປ່າລີສີສັງຫອນ(ອາດຈະເປັນດົງສີສັງວອນ)
2. ສ້າງອຸໂມງໂລ່ມທາດພຣະອໍຣະທັນ ອັນພຣະເຈົ້າຈັນທະບູຣີ ປະສິດທິສັກ ສ້າງໄວ້ແຕ່ກ່ອນທີ່ວັດປ່າມະຫາພຸດທະວົງ (ວັດມະຫາພຸດທະວົງສາໂສກປ່າຫຼວງ ທຸກວັນນີ້)
3. ສ້າງວັດປ່າກັນທອງ(ເຂົ້າໃຈວ່າ ແມ່ນບ່ອນຮ່ອງທອງ)
4.ວັດໜອງຍາງຄຳ (ເຂົ້າໃຈວ່າແມ່ນບ່ອນໂຮງແຮມເຊດຖາທິຣາດ)
5. ໄດ້ສະເດັດໄປກໍ່ເຈດີກວມທາດເກົ່າຢູ່ທີ່ຫ້ວຍບັງພວນ (ທາດບັງພວນມີລັກສະນະຈົບງາມທີ່ສຸດໜ່ວຍນຶ່ງ ແລະທາດບັງພວນນີ້ ແຕ່ເດີມກໍແມ່ນສ້າງຂຶ້ນພ້ອມໆກັນກັບທາດຫຼວງວຽງຈັນ, ບ້ານຫ້ວຍ ບັງພວນ ຕາບົນວຽງຄຸກຈັງຫວດໜອງຄາຍ) ແລະສ້າງວັດຂຶ້ນທີ່ ໂພນໜອງກົກອີກວັດໜຶ່ງ (ວັດໂພນໜອງກົກ ຢູ່ໃກ້ໆກັບວັດພຣະທາດບັງພວນ)
6. ສະເດັດໄປບູລະນະສ້ອມແປງພຣະທາດສີໂຄຕບູນ ຄືທາດໂພ່ນທີ່ເມືອງມະຣຸຂະນະຄອນ(ຄືເມືອງທ່າແຂກ)
7. ໄດ້ສະເດັດໄປສ້ອມແປງພຣະທາດພະນົມ

ໃນສະໄໝຂອງສົມເດັດພຣະເຈົ້າໄຊຍະເຊດຖາທິຣາດນີ້ ກິດຈະການສ້າງແປງວັດວາອາຮາມໄດ້ຈະເລີນກວ້າງຂວາງຫຼາຍທີ່ສຸດ ວັດວຽງຄຳອັນເປັນບ່ອນສະຖິດພຣະບາງຄັ້ງແຮກ ແຕ່ຄາວສົມເດັດພຣະເຈົ້າຟ້າງຸ່ມ ເຊີນຂຶ້ນມານັ້ນ ພຣະອົງກໍສະເດັດໄປບູລະນະປະຕິສັງຂອນ. ນອກຈາກສ້າງວັດແລະພະເຈດີແລ້ວ ຍັງຜາກົດວ່າພຣະອົງໄດ້ຫຼໍ່ພຣະພຸດທະຮູບອົງໃຫຍ່ໆຂຶ້ນຫຼາຍອົງ ເປັນຕົ້ນວ່າ ພຣະອົງຕື້ ທີ່ຢູ່ວັດອົງຕື້ວຽງຈັນ, ພຣະອົງຕື້ທີ່ຢູ່ວັດບ້ານນ້ຳໂມງອຳເພີທ່າບໍ່ ແລະພຣະສຸກ ພຣະເສີມ ເປັນຕົ້ນ ກໍແມ່ນສົມເດັດພຣະເຈົ້າໄຊຍະເຊດຖາທິຣາດ ທົງສ້າງຂຶ້ນທັງມວນ.



ພຣະອົງຕື້ ທີ່ຢູ່ວັດອົງຕື້, ນະຄອນຫຼວງວຽງຈັນ (ປີ 2010)

## 4. ການປະຕິສັງຂອນພຣະທາດຫຼວງ ໃນສະໄໝຕໍ່ມາ

ພຣະມະຫາກະສັດອົງສະເຫວີຍລາຊະສົມບັດ ໃນນະຄອນວຽງຈັນ ສືບຕໍ່ຈາກສົມເດັດພຣະເຈົ້າໄຊຍະເຊດຖາທິຣາດລົງມາ ບໍ່ຜາກົດວ່າມີອົງໃດໄດ້ສ້າງແປງພຣະທາດຫຼວງຕື່ມອີກ ຜາກົດແຕ່ວ່າເມື່ອປີ ພ.ສ.2184 (ຄ.ສ. 1641)ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດ ໄດ້ສະເດັດອອກໄປທຳບຸນນະມັດສະການພຣະທາດຫຼວງ ແລະໄດ້ທຳການຮັບຕ້ອນ ທ່ານ ວັນວຸດສະຕົບ ລາຊະທູດຊາວໂຮນລັງ ຢູ່ທາດຫຼວງເປັນທາງການ. ທ່ານ ວັນວຸດສະຕົບ ໄດ້ກ່າວເຖິງທາດຫຼວງນີ້ວ່າເປັນທາດທີ່ຈົບງາມຫຼາຍ ອົງພຣະທາດຫຸ້ມດ້ວຍແຜ່ນຄຳ ທີ່ມີນ້ຳໜັກເຖິງ 1000 ລີວ(ມາດຕາຊັ່ງນ້ຳໜັກ ຂອງໂຮນລັງ ຄື ໜັກປະມານ 14,000 ບາດ) ຕໍ່ຈາກສະໄໝ ສົມເດັດພຣະເຈົ້າສຸຣິຍະວົງສາທັມມິກະຣາດລົງມາ ກໍບໍ່ເຫັນມີພຣະກະສັດອົງໃດກ່າວເຖິງການສ້ອມແປງທາດຫຼວງອີກ ແຕ່ພຣະກະສັດທຸກພຣະອົງ ກໍຄົງສະເດັດໄປທຳບຸນນະມັດສະການພຣະທາດຫຼວງເປັນປະຈຳສືບຕໍ່ກັນມາບໍ່ໄດ້ຂາດ ຈົນມາເຖິງສະໄໝຂອງສົມເດັດພຣະເຈົ້າອະນຸຄອງນະຄອນວຽງຈັນ ແລະໄດ້ສູນເສຽອິດສະລະພາບລົງໃນປີ ພ.ສ.2370(ຄ.ສ. 1827) ນະຄອນວຽງຈັນຖືກທຳລາຍລົງຈົນຣາບກ້ຽງ ກຳແພງນະຄອນຖືກມ້າງເພ ຫໍໂຮງແລະວັດວາອາຮາມນັບເປັນຮ້ອຍໆວັດໃນກຳແພງນະຄອນວຽງຈັນ ຖືກຈູດເຜົາ

ເປັນເຖົ່າຖ່ານໝົດ ພຣະທາດຫຼວງທີ່ສະຫງ່າງາມມາແຕ່ບູຮານ ຈຶ່ງກາຍເປັນທາດຮ້າງຢູ່ກາງປ່າ.

## 5. ສະພາບຂອງທາດຫຼວງວຽງຈັນ ສະໄໝ ພ.ສ. 2410 (ຄ.ສ.1867)

ຕໍ່ມາເຖິງປີ ພ.ສ. 2410 (ຄ.ສ.1867) ກອງສຳຫຼວດແມ່ນ້ຳຂອງຝຣັ່ງ ອັນມີທ່ານ ດູດາ ເດີລາເກຣ (Doudart de Lagrée)ເປັນຫົວໜ້າ ໄດ້ມາເຖິງວຽງຈັນ. ໃນຄະນະກອງສຳຫຼວດນີ້ມີ ທ່ານ ເດີ ກາກເນ (Mr. de Carné) ໄດ້ຂຽນສະພາບວຽງຈັນ ແລະທາດຫຼວງຕາມທີ່ທ່ານໄດ້ເຫັນໃນເວລານັ້ນໄວ້ດັ່ງນີ້:

"ບໍ່ເຫິງປານໃດ ພວກເຮົາກໍໄດ້ເຫັນກຳແພງເມືອງກຳແພງນັ້ນສູງແລະກວ້າງຫຼາຍ ເທິງຫຼັງກຳແພງປະດັບດ້ວຍໃບສີມາ ຕິດຕໍ່ກັນເປັນແຖວງາມ ຢູ່ແຄມປະຕູໃຫຍ່ມີເສົາໃຫຍ່ຕົ້ນນຶ່ງຝັງຢູ່ກຳແພງເມືອງຍາວໄປຕາມແຄມນ້ຳ (ຮ່ອງຄູວຽງ) ກາຍເລີກເຂົ້າໄປໃນປ່າໄຜ່ໜາມເປັນຮູບທັກໄປທັກມາ ເຫັນກອງດິນຈີ່ເປັນຍ່ານໆໄປ ຄືຈະແມ່ນຄູວຽງແຕ່ກ່ອນໆ ຈາກການຄົ້ນຄວ້າຢູ່ເຫິງນານ ພວກຂ້າພະເຈົ້າຈຶ່ງຮູ້ຕັກວ່າເມືອງນີ້ບໍ່ມີຕຶກ(ທີ່ກໍ່ດ້ວຍດິນຈີ່) ນອກຈາກໂຮງເຈົ້າຊີວິດທີ່ນັ້ນ. ພາຍໃນເມືອງມີວັດວາອາຣາມ ແລະຫໍໄຕຫຼາຍບ່ອນ ສຳລັບໃສ່ໜັງສື(ໃບລານ)ທໍເຫຼົ່ານີ້ ມີ

ຈຳນວນມາກຫຼາຍ ຈຶ່ງບໍ່ອາດນັບໃຫ້ຖ້ວນໄດ້ ທໍໄຕທຸກທໍ ປຸກຂຶ້ນເປັນແບບດຽວກັນ ແລະເອ້ແຕ້ມວາດດຽວກັນ ຕ່າງ ແຕ່ຂະໜາດເທົ່ານັ້ນ"

ທ່ານຜູ່ນີ້ໄດ້ກ່າວເຖິງທາດຫຼວງຕໍ່ໄປວ່າ "ມີທາງ ກວ້າງຢູ່ຊື່ປະຕູໃຫຍ່ ແລະມີກົກໄມ້ເກົ່າແກ່ປູກຢູ່ແຄມທາງ ທາງນັ້ນຜ່ານໄປຕາມທົ່ງນາ ທີ່ເປັນບວກນ້ຳເປັນຮ່ອງ ແລະເປັນດິນຊາຍມີປ່າໄຜ່ເກີດປົກຄຸມຢູ່ພວກເຮົາຍ່າງ ໄປໜ້ອຍໜຶ່ງ ກໍເຫັນວັດຖຸບູຮານເປັນວັດຮ້າງເກົ່າແກ່ ເຊິ່ງ ປຸກເປັນເທືອກແຖວດີມີຊາກຫັກພັງຂອງທາດນ້ອຍຕັ້ງ ຫຼວງຫຼາຍ ຂ້າພະເຈົ້າໄດ້ເຫັນເຈດີອັນເປັນສິລະປະຂອງ ລາວ ທີ່ນັບວ່າເປັນສີມືຊັ້ນຍອດ ແຕ່ຫາກບໍ່ເປັນຂອງໃຫຍ່ ຫຼວງພໍປະມານ ທັງບໍ່ໝັ້ນຄົງຖາວອນ ແຕ່ຈະວ່າເປັນຂອງ ບໍ່ງາມນັ້ນບໍ່ໄດ້ ເຈດີຍະສະຖານນີ້ພວກໄທໄດ້ປະໄວ້ (ບໍ່ ທຳລາຍ) ຖານຂອງເຈດີສອງຖານລຸ່ມນັ້ນບໍ່ມີສິ່ງໃດສຳຄັນ ພິເສດ ແຕ່ຖານກ້ອງພະເຈດີອັນເປັນຖານທີສາມນັ້ນ ປະດັບດ້ວຍລິງລາຍດອກໄມ້ ເປັນຮູບກາບດອກບົວທີ່ ກຳ ລັງຈະບານມີແທ່ນອັນແໜ້ນໜາເຊິ່ງເຕັມໄປດ້ວຍການ ສະຫຼັກລິງລາຍແລ້ວມີທາດນ້ອຍ 34 ລູກອັນຈົບງາມ ຕັ້ງຢູ່ ເທິງແທ່ນນັ້ນ. ຕໍ່ຈາກ ນັ້ນຂຶ້ນໄປເປັນເຕົ້າອົງພຣະທາດອັນ ປາກົດຄືດັ່ງຜຸດພຸ່ງຂຶ້ນເປັນຝັດໃບໄມ້ທີ່ໃຫຍ່ງາມ ສ້ວຍຂຶ້ນ ເທິງຢູ່ຕາມຮີມໄມ້ອ້ອມພຣະທາດນັ້ນມີກະຕຶບຢູ່ຫຼາຍຫຼັງ ອັນພໍເບິ່ງໄດ້"

ນອກຈາກທ່ານ ເດີ ກາກເນ (Mr. de Carné)ແລ້ວ ທ່ານ ຟຣັງຊິດ ກາກນີເຍ (Françis Garnier) ທີ່ເປັນບຸກຄົນຢູ່ ໃນຄະນະດຽວກັນນີ້ ກໍໄດ້ຂຽນພັນລະນາເລື່ອງທາດຫຼວງ ໄວ້ດັ່ງນີ້:

"ເດີນທາງໄປທິດເໜືອ ຜ່ານປ່າໄມ້ໄປບໍ່ເຫິງ ກໍໄດ້ ເຫັນກຳແພງເມືອງຍັງມີສະພາບດີສົມຄວນຢູ່ ຮ່ອງນ້ຳກໍມີ ນ້ຳເຕັມຢູ່ ປະຕູໂຂງຂອງກຳແພງເມືອງປະຕູໜຶ່ງສ້າງໄວ້ ຢ່າງແໜ້ນໜາ ປະຕູນີ້ເປັນທາງອອກໄປຫາບ້ານນອກໄດ້ ເມື່ອໄຂປະຕູນັ້ນອອກໄປ ກໍໄປຕໍ່ໃສ່ທາງໃຫຍ່ເສັ້ນໜຶ່ງທີ່ ຈົບງາມ ມີກົກໄມ້ປູກເປັນແຖວທັງສອງຂ້າງ ທາງເສັ້ນນີ້ ເນັ່ງໄປທາງຕາເວັນຕົກສຽງເໜືອ ພວກຂ້າພະເຈົ້າເດີນໄປ ຕາມທາງນີ້ ນານປະມານ 45 ນາທີ ຈຶ່ງໄປເຖິງທາດຫຼວງ. ທາດຫຼວງແມ່ນທາດທີ່ສວຍງາມລູກໜຶ່ງຂອງລາວ, ທາດ ລູກກາງ(ອົງພຣະທາດ)ເປັນຮູບ 4 ລ່ຽມ ເຕົ້າລຸ່ມເປັນຮູບ ກົມຍອດແຫຼມ(ທາດແບບນີ້) ເຮົາເຄີຍເຫັນມາແລ້ວໃນ ປະເທດກຳພູຊາ, ເຕົ້າລຸ່ມຂອງທາດຊ້ອນກັນເປັນສອງ ຖ້ານ ອົງພຣະທາດຕັ້ງຢູ່ເທິງເຕົ້າຖ້ວນສອງ ແລະມີພຣະ ທາດນ້ອຍ 28 ລູກຕັ້ງລຽນອ້ອມຢູ່ ຫວ່າງກາງມີທາງເປັນ ຂັ້ນໄດລົງມາຫາຖ້ານລຸ່ມ ຢູ່ສອງດ້ານ ຄືດ້ານເໜືອ ແລະ ດ້ານໃຕ້. ຢູ່ຊານລຸ່ມທາງດ້ານຕາເວັນອອກຂອງທາດ ມີຫໍ ໄຫວ້ທີ່ສວຍງາມ ປຸກກວມທາດນ້ອຍລູກໜຶ່ງ ເຊິ່ງສູງປະ ມານ 3-4 ແມັດ ເບິ່ງຕາມລັກສະນະແລ້ວ ເຫັນວ່າເປັນ

ຂອງສັກສິດ ແລະເປັນທີ່ສັກກາລະບູຊາຂອງຊາວພື້ນເມືອງແທ້ ເພາະມີ ຄໍາຟອກຢ່າງຫຼວງຫຼາຍ ແລະທ່ານເຈົ້າເມືອງໜອງຄາຍ ຜູ່ຍັງຢູ່ດຽວນີ້ ໄດ້ເປັນຜູ່ສ້ອມແປງທາດນ້ອຍ ທ່ານໄດ້ຈ່າຍ ຫຼາຍກວ່າ 1000 ບາດ (70-80,000 ຟຣັ້ງ)

ຖ້ານລຸ່ມສຸດມີຂັ້ນໄດ 4 ຂັ້ນລົງທັ້ງ 4 ດ້ານ ມີກຸດີພຣະສົງທີ່ຢູ່ເຝົ້າພຣະທາດຫຼາຍຫຼັງ ແລະວັດກໍຫຼາຍວັດ ກຸດີລາງຫຼັງໄດ້ໂຢດເພ ແລ້ວກໍມີ ແລະກຸດີເຫຼົ່ານັ້ນຕັ້ງລຽນອ້ອມພຣະທາດຢູ່.

ຢູ່ປະຕູເຂົ້າດ້ານຕາເວັນອອກ ມີແຜ່ນສິລາເລກຕັ້ງຢູ່ (ຢູ່ນອກ ຫລື ຢູ່ໃນກົມມະລຽນ ບໍ່ເຫັນບອກໄວ້) ສິລາເລກນັ້ນໄດ້ກ່າວເຖິງການກໍ່ສ້າງພຣະທາດນີ້ ໃນສະຕະວັດທີ 16(ຄຣິດຕະສັກລາດ)

ຕໍ່ມາລະຫວ່າງປີ ພ.ສ. 2316 ກົງກັບ ຄ.ສ. 1873 ພວກໂຈນຫໍ້ ໄດ້ມາມ້າງເພທາດນ້ອຍ ອ້ອມພຣະທາດໃຫຍ່ນັ້ນເພື່ອຊອກເອົາເງິນຄໍາ ແລະຂອງອັນມີຄ່າທີ່ຝັງຢູ່ໃນພຣະທາດ, ພຣະທາດຫຼວງທີ່ໂຢດເພຢູ່ແລ້ວ ນັ້ນຈຶ່ງໂຢດເພລົງອີກເປັນອັນມາກ.

ຄັນມາເຖິງປີ ພ.ສ.2453 ກົງກັບ ຄ.ສ. 1900 ເມື່ອລັດຖະບານຝຣັ່ງໄດ້ປະເທດລາວແລ້ວ ທາງລາຊະການຝຣັ່ງຈຶ່ງໃຫ້ ທ່ານໂມແຣັງ(Morin) ຂ້າຫຼວງຝຣັ່ງປະຈໍາວຽງຈັນ ທໍາການສ້ອມແປງພຣະທາດ, ໃນການສ້ອມແປງນັ້ນ ໄດ້ຂຶ້ນສ້ອມແປງຍອດພຣະທາດ ເຊິ່ງແຕ່ເກົ່າເພິ່ນວ່າ

ເປັນຮູບ ນ້ຳເຕົ້າປີ່ນປາຍລົງ(ໃນຄາວນີ້ ໄດ້ຍິນພວກຜູ້ເຖົ້າເວົ້າວ່າ ຜູ້ສ້ອມແປງ ໄດ້ເອົາຄຳຈາກຍອດພຣະທາດໄປ)

ຕາມລາຍງານຂອງທ່ານຮັງຣີ ປາກມັງຕິເອ (Henri Parmentier) ລົງວັນທີ 23 ເມສາ 1912 ກ່າວໄວ້ວ່າ ໃນຄາວນັ້ນ ຈຳນວນທາດນ້ອຍ 30 ລູກນັ້ນໄດ້ຂາດໄປ 8 ລູກ ແລະກຳແພງລະບຽງກໍເກືອບເພພັງໝົດ"

ຕໍ່ມາເຖິງປີຄ.ສ.1929 ທາງລາຊະການຝຣັ່ງໄດ້ແຕ່ງຕັ້ງໃຫ້ທ່ານ ຟົມແບກໂຕ(Fombertaux) ເປັນຜູ້ຮັກສາບູຮານວັດຖຸຂອງປະເທດ ລາວ ດັ່ງນັ້ນທ່ານຈຶ່ງໄດ້ລົງມືສ້ອມແປງພຣະທາດຫຼວງນີ້ແຕ່ປີຄ.ສ.1930 ເປັນຕົ້ນມາຈົນເຖິງປີ 1935 ຈຶ່ງສຳເລັດ ເມື່ອທຳການສ້ອມແປງນັ້ນ ທ່ານຟົມແບກໂຕ ໄດ້ໃຫ້ຂຸດເບິ່ງຖານຊັ້ນລຸ່ມຂອງພຣະທາດດ້ານຕາເວັນຕົກ ກໍໄດ້ເຫັນຮູບຂອງຫໍໄຫວ້ອັນເກົ່າ ອັນມີລັກສະນະເປັນແທ່ນພຽງ 4 ລ່ຽມ ມີຂັ້ນໄດຂຶ້ນພ້ອມແທ່ນນັ້ນຍັງດີໆຢູ່ ພັກລູກແກ້ວອັນປະດັບດ້ວຍໃບສີມາ ເປັນຮູບດຽວກັນກັບຖານທີ 1 ແລະທີ 2 ຂອງປັດຈຸບັນນີ້ ກໍຍັງຢູ່ດີຄືກັນ ເມື່ອຂຸດເລີຍເຂົ້າໄປເຖິງເຕົ້າທາດໃຫຍ່ ກໍໄດ້ເຫັນຮູບທາດເກົ່າຢູ່ໃນກາງອົງທາດປັດຈຸບັນນີ້ດ້ວຍ. ສະນັ້ນຈຶ່ງເປັນການເຊື່ອແນ່ວ່າ ສົມເດັດພຣະເຈົ້າໄຊຍະເຊດຖາທິຣາດ ໄດ້ສ້າງ ພຣະທາດຫຼວງນີ້ ໂດຍກໍ່ກວມທາດເກົ່າຕາມຕຳນານກ່າວໄວ້ແທ້. ການສ້ອມແປງໃນຄັ້ງນັ້ນ ໄດ້ແປງກຳແພງລະບຽງທັງໝົດພ້ອມທັງປະຕູກຳແພງລະບຽງຫໍໄຫວ້ທາງ

ດ້ານຕາເວັນຕົກທາດນ້ອຍທີ່ຫັກພັງ ແລະຍອດພຣະທາດ ໃຫ້ເປັນຮູບຄືເກົ່າຕາມຮູບແຕ້ມຂອງທ່ານ ເດີ ລາບຣອດ (De Labroche) ແຕ່ວ່າສິມຮ້າງທີ່ຢູ່ນອກກົມມະລຽນທາງຕາເວັນຕົກ ບ່ອນປະດິດສະຖານພະບໍຣົມມະຮູບຂອງສົມເດັດພຣະເຈົ້າໄຊຍະເຊດຖາທິຣາດດຽວນີ້ ແລະທາດນ້ອຍທັງຫຼາຍທີ່ເພພັງຢູ່ນອກກົມມະລຽນນັ້ນ ເພິ່ນໄດ້ມ້າງອອກໝົດ ຈຶ່ງເຫັນເປັນເດີ່ນກວ້າງຢູ່ທຸກວັນນີ້ ເຊິ່ງເດີ່ນອ້ອມທາດເຫຼົ່ານີ້ແຕ່ກ່ອນ ມີແຕ່ເຈດີຕັ້ງລຽນອ້ອມຢູ່ທັງມວນ.

ໃນການສ້ອມແປງພຣະທາດຫຼວງຄັ້ງປີ 1930 ນີ້ ໄດ້ໃຊ້ຊັບໝົດໄປ 50,000 ຫຼຽນ ເງິນຈຳນວນນີ້ ແມ່ນຂອງຄັງປະເທດອິນດູຈີນ 10,000 ຫຼຽນ, ຄັງປະເທດລາວ 15,000 ຫຼຽນ, ຄັງສະມາຄົມ ສຶກສາບູລະພາປະເທດ (EFEO) 22,000 ຫຼຽນ ແລະ ຄັງກຳແພງວຽງຈັນ 3,000 ຫຼຽນ.

ຢູ່ມາເຖິງປີ ພ.ສ. 2500 (ຄ.ສ.1957) ເມື່ອປະເທດລາວໄດ້ຮັບຄວາມອິດສະລະພາບ ເປັນເອກະລາດໂດຍສົມບູນແລ້ວ ລັດຖະບານພາຍໃຕ້ພະບໍຣົມຣາຊູປະຖຳຂອງພຣະບາດ ສົມເດັດພະເຈົ້າສຣີສະວ່າງວົງ ອົງເປັນພຣະເຈົ້າແຜ່ນດິນແຫ່ງລາຊະອານາຈັກລາວ ພ້ອມກັນກັບປະຊາຊົນພົນລະເມືອງທົ່ວປະເທດໄດ້ ທຳບຸນສະຫຼອງ



ຫໍທັມມະສະພາຫລັງເກົ່າ (ສາລາພັນຫ້ອງ ໑໐໐໐) ທີ່ສ້າງຂຶ້ນເມື່ອ ພ.ສ ໔໕໐໐ (ຄ.ສ ໑໙໕໗) ໄດ້ຣື້ຖອນ ສາຍເຫດທີ່ຣື້ຖອນນັ້ນ ຫມົດອາຍຸການໄຊ້ງານແລ້ວ ວັດສະດຸຕ່າງໆ ກໍ່ເສຍຫາຍຫມົດບໍ່ສາມາດສ້ອມແປງຄືນໃຫມ່ໄດ້.

ອາຍຸ ພຣະສາສະໜາທີ່ລ່ວງມາໄດ້ 2500 ພຣະວັດສາ ຈຶ່ງໄດ້ພ້ອມກັນບູລະນະພຣະທາດຫຼວງ ໂດຍການຈັດການຟອກຄຳພຣະທາດ ແຕ່ສ່ວນກາງອົງພຣະທາດຂຶ້ນໄປຈົນເຖິງຍອດ ພ້ອມກັນນີ້ກໍໄດ້ສ້າງຫໍທຳມະສະພາຫຼວງ ແລະມະຫາກຸດິຫລວງຂຶ້ນ ທາງດ້ານຕາເວັນຕົກສຽງເໜືອຂອງພຣະເຈດີ. ມະຫາກຸດິນັ້ນ ຍາວ 75 ແມັດ ແລະກວ້າງ 24 ແມັດ, ສ້າງເປັນກຸຕິຕຶກ 2 ຊັ້ນ, ປະກອບ ດ້ວຍຫ້ອງຕ່າງໆຫຼາຍກວ່າ30ຫ້ອງ. ໃນການສ້າງມະຫາກຸດິນີ້ ລັດຖະບານໄດ້ຈ່າຍຊັບໄປ 9,889,000 (ເກົ້າລ້ານແປດແສນແປດໝື່ນເກົ້າພັນ)ກີບ ສ່ວນຫໍທຳມະສະພາຫຼວງນັ້ນ ສ້າງເປັນສາລາໂຮງທຳ ພື້ນຕ່ຳຊູດິນ ມີຄວາມຍາວດ້ານລະ 77 ແມັດ ກວ້າງດ້ານລະ 38,50 ແມັດ, ມີເສົາ 130 ເສົາ ສາມາດບັນຈຸຄົນໄດ້ປະມານ 3,000 ຄົນ. ໃນການສ້າງຫໍທຳມະສະພານີ້ ລັດຖະບານໄດ້ຈ່າຍ ຊັບໄປ 10,308,680 (ສິບລ້ານສາມແສນ ແປດພັນຫົກຮ້ອຍແປດສິບ) ກີບ, ນອກຈາກນີ້ ລັດຖະບານຍັງໄດ້ສ້ອມແປງພຣະອຸໂບສົດ (ສິມ)ໃຫຍ່ທີ່ ວັດໃຕ້ພຣະທາດຂຶ້ນອີກ ແລະໃນປີດຽວກັນນີ້ ທາງລາຊະການທະຫານ ໄດ້ທຳການປັ້ນພຣະບໍຣົມຮູບຂອງພຣະເຈົ້າໄຊຍະເຊດຖາທິຣາດ ປະດິດສະຖານໄວ້ທາງດ້ານຕາເວັນຕົກ ຊື່ປະຕູເຂົ້າກົມມະລຽນພຣະທາດ ເພື່ອເປັນອະນຸສາວະລີ ທີ່ພຣະອົງໄດ້ທົງສ້າງພຣະທາດຫຼວງນີ້ຂຶ້ນໃຫ້ເປັນ ທີ່ສັກກາລະບູຊາຕໍ່ມາ.

## 6. ສະພາບຂອງທາດຫຼວງປັດຈຸບັນ (ກ່ອນປີ 1975)

(ຕາມບັນທຶກຂອງພຣະຍາອະນົງຄ໌ ຣາຊເສນາ ຜູ່ຮັກສາບູຮານສະຖານ )ພຣະທາດຫລວງວຽງຈັນ ມີຮູບລັກສະນະຄືກັນກັບພຣະທາດໂບໂຣບູໂດ (ບໍຣົມພຸດໂທ) ທີ່ມີຢູ່ໃນປະເທດອິນໂດເນເຊຍ ມີລັກສະນະເປັນສາມ ຖ້ານດັ່ງນີ້:

໑. ຖ້ານລຸ່ມສຸດເປັນຕີນທາດ ທາງດ້ານຕາເວັນຕົກແລະດ້ານຕາເວັນອອກ ຍາວດ້ານລະ 69 ແມັດ ທາງດ້ານເໜືອແລະດ້ານໃຕ້ຍາວດ້ານລະ 68 ແມັດ.ໃນຖ້ານລຸ່ມນີ້ ມີໃບສີມາອ້ອມທັງໝົດ 323 ໃບແລະມີຫໍໄຫວ້ຢູ່ທັງສີ່ດ້ານ, ມີຂັ້ນໄດຂຶ້ນໄປຫາຫໍໄຫວ້ທຸກໆຫໍ ແຕ່ຢູ່ຫໍໄຫວ້ ດ້ານຕາເວັນອອກ ມີທາດນ້ອຍລູກໜຶ່ງ ປະດັບດ້ວຍລວດລາຍຢ່າງງາມ ທາດນ້ອຍນີ້ ຄົນທັງຫຼາຍຮຽກວ່າ ທາດສຣີທັມມະອະໂສກເຊິ່ງອາດໝາຍບອກວ່າ ແມ່ນເຈດີລູກໜຶ່ງໃນຈຳນວນ 84000 ລູກທີ່ພຣະເຈົ້າອະໂສກຣາດ ໄດ້ສ້າງຂຶ້ນແຕ່ລະຫວ່າງ ພ.ສ. 218-236 ດັ່ງໄດ້ກ່າວມາແລ້ວແຕ່ຕົ້ນ. ໃນຖ້ານລຸ່ມນີ້ ເພີ່ນປຽບໃສ່ກັບໂລກະທາດ ຄືຊັ້ນ ກາມາວະຈອນ.

໒. ຖ້ານຖ້ວນສອງ ຢູ່ຖັດຖ້ານຫໍໄຫວ້ຂຶ້ນໄປ ຖ້ານນີ້ຍາວດ້ານລະ 48 ແມັດ ມີກາບດອກບົວໃຫຍ່ອ້ອມຮອບ ທັງໝົດມີຈຳນວນ 120 ກາບ, ຢູ່ປາຍກາບດອກບົວໃຫຍ່ ເຮັດ

ເປັນດູກາງ ຫຼືເສັ້ນລວດເປັນຂອບອ້ອມທັງສີ່ດ້ານ ແລ້ວຕັ້ງໃບສີມາເທິງດູກາງນັ້ນ. ໃບສີມາໃນຖ້ານນີ້ມີ ຈຳນວນ 228 ໃບ ບ່ອນກາງໃບສີມາ ເຮັດເປັນໂກນສຳລັບໃສ່ພຣະພິມໃບລະ 1 ອົງ, ຖ້ານຖ້ວນສອງອັນເປັນບ່ອນຕັ້ງໃບສີມາໃສ່ພຣະພິມນີ້ ເພິ່ນເຮັດປະຕູໂຂງໄວ້ຊື່ທາງຂຶ້ນຫໍໄຫວ້ ທັງສີ່ດ້ານ ຫລັງປະຕູເປັນຍອດຜາສາດ ແລະຖັດຂອບໃບສີມາເຂົ້າໄປເປັນທາງອ້ອມຮອບທາດ.ຢູ່ຕາມທາງນີ້ເພິ່ນກໍ່ທາດນ້ອຍລຽນໄປຕາມທາງມີຈຳນວນ 30 ລູກ ຄືທາງດ້ານຕາເວັນຕົກ ແລະຕາເວັນອອກມີດ້ານລະ 9 ລູກ ສ່ວນດ້ານເໜືອແລະດ້ານໃຕ້ ມີດ້ານລະ 6 ລູກ ທາດ ນ້ອຍນີ້ຮຽກວ່າທາດສະມະຕິງສະປາຣະມີ ຄືເຮັດໄວ້ໃຫ້ຄົບຖ້ວນຕາມປາຣະມີທັມ 30 ປະການຂອງພຣະພຸດທະເຈົ້າ. ຢູ່ກາງເຕົ້າທາດນ້ອຍ30 ລູກນີ້ ເພິ່ນໄດ້ຂຽນໜັງສືບອກຊື່ທາດໄວ້ທຸກໜ່ວຍ ຊື່ນັ້ນກໍຮຽກຕາມ ປາຣະມີທັງ 30 ນັ້ນເອງ ຄືຕັ້ງແຕ່ ທານະປາຣະມີ ທານະອຸປປາຣະມີ ທານະ ປາຣະມັດຖະປາຣະມີ ໄປຈົນຄົບ 30 ແລະພາຍໃນໂຕທາດນ້ອຍນີ້ອີກ ແຕ່ກ່ອນເພິ່ນໄດ້ເອົາທອງຄຳ ຫຼໍ່ເປັນຮູບທາດຝັງໄວ້ທຸກໆລູກ, ທາດ ທອງຄຳນັ້ນ ທາດໃດໜັກປະມານ 4 ບາດ ແລະຈາລຶກອັກສອນບອກໄວ້ ຕັ້ງແຕ່ທານະປາຣະມີໄປ ຄືກັນກັບຈາລຶກຢູ່ທາງນອກຮອງລູກທາດທອງຄຳນັ້ນ ມີລານຄຳຍາວປະມານສອກກຳ ຈາລຶກພຣະທຳມະບົດ "ເຍທັມມາ ເຫຕຸປປະພະວາ" ໄວ້ທຸກໆໃບຈົນຄົບ 30 ໃບ

ແຕ່ລູກທາດທອງຄຳ ແລະລານຄຳເຫຼົ່ານັ້ນ ໄດ້ສູນເສຍໝົດແລ້ວ ຖ້ານຂອງທາດຊັ້ນທີສອງນີ້ ເພິ່ນປຽບໃສ່ກັບໂລກະທາດຊັ້ນ ຣູປາວະຈອນ ຄື ຊັ້ນຣູປະພົມ.

໓. ຖ້ານຖ້ວນສາມ ຕັ້ງຂຶ້ນຖັດຈາກທາດນ້ອຍ 30 ລູກນັ້ນເຂົ້າໄປ ຖ້ານນີ້ກວ້າງດ້ານລະ 30 ແມັດ ເຕົ້າຂອງຖ້ານຖ້ວນສາມນີ້ ເປັນຮູບຫຼັງເຕົ່າ ຫຼື ຮູບໄອຂວ່ຳ ອັນມີລັກສະນະຄືກັນກັບພຣະທາດສັນຈີຂອງເຈົ້າອະໂສກຣາດໃນອິນເດຍຢູ່ເທິງຖ້ານຫຼັງເຕົ່າ ເປັນຖ້ານຕີນຍອດທາດມີຮູບເປັນ 4 ລ່ຽມ ອ້ອມດ້ວຍກາບດອກບົວໃຫຍ່ ເຊິ່ງມີ ປາຍກາບພອມບານອອກ ຖັດກາບດອກບົວຂຶ້ນໄປເປັນເຕົ້າອີກ. ເຕົ້ານີ້ຈຶ່ງມີພັກເປັນຮູບໃບກຂວ່ຳໃບກຫງາຍຊ້ອນກັນ ຖັດໃບກຫງາຍຂຶ້ນໄປເປັນພັກເຕົ້າສ້ວຍເຂົ້າອີກແລ້ວຈຶ່ງມີແອວຂັນຖັດແອວຂັນຂຶ້ນໄປເປັນເຕົ້າຈອມທາດ ເຕົ້ານີ້ເປັນຮູບສີ່ລ່ຽມ ເຫວີຂຶ້ນເທິງຈັກໜ່ອຍຕໍ່ຈາກເຕົ້າເຫວີນີ້ ແມ່ນໂຕຍອດທາດອັນເປັນຮູບສ້ວຍຄືໝາກປີແຕ່ຫາກເປັນຮູບສີ່ລ່ຽມ. ຍອດທາດບ່ອນນີ້ ບູຮານຮຽກວ່າດວງປີ (ເຈດີດົ້ວດວງປີພົ້ນພຸ່ງ) ຢູ່ເທິງດວງປີ ຈຶ່ງແມ່ນຮູບເສດຕະສັດອັນເປັນບ່ອນສຸດຍອດທາດ. ຖ້ານຖ້ວນສາມນີ້ ເພິ່ນປຽບໃສ່ກັບໂລກທາດ ຊັ້ນ ອະຣູປະພົມ.



*ສະພາບ ພຣະທາດຫຼວງ ລະຫວ່າງ ຄ.ສ. 1873 - 1900*

*(ພາຍຫຼັງສົງຄາມຫໍ້)*



*ດວງປີ ຫຼື ຍອດທາດເກົ່າ*

*ທີ່ຫັກອອກ*

ພຣະທາດຫລວງນີ້ ມີຂະໜາດສູງແທກໄດ້ແຕ່ຕີນຮອດຍອດ 45 ແມັດ, ຢູ່ອ້ອມພຣະທາດຫລວງນີ້ ເພິ່ນເຮັດກົມມະລຽນອ້ອມຮອບ ແລະມີປະຕູເຂົ້າທັງ 4 ດ້ານ ກົມມະລຽນຍາວ ດ້ານລະ 91,75 ແມັດ ຝາຜະໜັງກົມມະລຽນເຮັດເປັນປ່ອງຮູນົກຈິວໝົດທຸກດ້ານ ຟາກກົມມະລຽນອອກມາທາງດ້ານເໜືອ ແລະດ້ານໃຕ້ ເປັນວັດທີ່ພຣະພິກຂຸສົງ ສາມະເນນອາໄສຢູ່ຮຽກວ່າ ວັດທາດຫຼວງເໜືອ ແລະວັດທາດຫຼວງໃຕ້, ມະຫາກຸດີແລະຫໍທັມມະສະພາ ຕັ້ງຢູ່ບໍລິເວນວັດທາດຫຼວງເໜືອ.

## 7. ຄຳສັນນິຖານຂອງຜູ່ຂຽນ(ມະຫາສິລາ)

ເຫດການເລື່ອງການສ້າງນະຄອນວຽງຈັນ ແລະພຣະທາດຫຼວງ ຄັ້ງແຮກຕາມທີ່ກ່າວໄວ້ ໃນໜັງສືອຸຣັງຄະນິທານ ດັ່ງກ່າວມາຂ້າງຕົ້ນນັ້ນ ຈະເປັນຈິງພໍພຽງໃດ ແລະຕົກຢູ່ໃນລະຫວ່າງ ພຸດທະສັກຣາດທໍ່ໃດນັ້ນ ຍັງບໍ່ມີຫຼັກຖານອັນໃດມາຢັ້ງຢືນໄດ້ ແຕ່ວ່າຕາມເຫດການທີ່ກ່າວມານັ້ນ ຖ້າຈະອະນຸມານເບິ່ງແລະ(ເຊື່ອວ່າ)ເປັນຈິງຕາມນັ້ນແທ້ກໍຄົງຈະຕົກຢູ່ໃນ ສະໄໝຂອງພຣະເຈົ້າອະໂສກຣາດປົກຄອງປະເທດອິນເດຍ ຄືຕົກຢູ່ລະຫວ່າງ ພ.ສ.236, ສະນັ້ນ ເຮົາຈຶ່ງຄວນສັນນິຖານເບິ່ງວ່າ ໃນສະໄໝ ຂອງພຣະ

ເຈົ້າອະໂສກຣາດນັ້ນ ປະຊາຊົນພົນລະເມືອງທີ່ມາຕັ້ງ ບ້ານເມືອງຢູ່ໃນດິນແດນອັນເປັນປະເທດລາວ ປະເທດ ໄທແລະປະເທດກຳປູເຈຍ(ຂະເໝນ)ທຸກວັນນີ້ ແມ່ນຄົນ ຈຳພວກໃດ ເຊື້ອຊາດໃດ ແລະພຣະພຸດທະສາສະໜາ ໄດ້ແຜ່ຜາຍເຂົ້າມາເຖິງດິນແດນສ່ວນນີ້ ແຕ່ສະໄໝນັ້ນ ແທ້ຫຼືບໍ່ ? ບັນຫາສອງຂໍ້ນີ້ມີທາງທີ່ພໍຈະກ່າວໄດ້ດັ່ງຕໍ່ໄປນີ້:

ເຊື້ອຊາດຜູ່ເປັນເຈົ້າຂອງຖິ່ນຖານເດີມແຜ່ນດິນ ອັນ ເປັນປະເທດລາວທຸກວັນນີ້ ຕະຫຼອດລົງໄປເຖິງປະເທດ ຂະເໝນ(ກຳປູເຈຍ)ແລະຫວຽດນາມໃຕ້ ໂຮມທັງພາກອີ ສານຂອງປະເທດໄທນຳ ແຕ່ສະໄໝກ່ອນ ເມື່ອໄດ້ພັນປີ ປາຍມາແລ້ວ ຊາວຈີນ ຮຽກວ່າ ປະເທດ"ຟູນັນ"(ລາງຄົນ ວ່າແມ່ນ ພະນົມ) ປະຊາຊົນຜູ່ເປັນເຈົ້າຂອງປະເທດຟູນັນນີ້ ຈີນຮຽກວ່າ ເຈນລະ(ມີສຽງໃກ້ກັບຄຳວ່າ ຈາມ ຫຼື ຂະເໝນ) ປະເທດຟູນັນຫຼືອານາຈັກຟູນັນນີ້ແບ່ງອອກເປັນສອງພາກ ຄື:

ຫາມຈຳໜາຍ

ກ. ພາກເໜືອຮຽກວ່າ ແຄວ້ນກຳພູປູຣະ ພາກນີ້ກ່າວ ວ່າແມ່ນດິນແດນທີ່ເປັນປະເທດລາວ ນັບແຕ່ແຂວງ ວຽງ ຈັນ ລົງໄປຕະຫຼອດເຖິງພາກອີສານ ຂອງໄທໃນປັດຈຸບັນ ປະຊາຊົນທີ່ຢູ່ໃນພາກເໜືອນີ້ ຈີນຮຽກວ່າເຈນລະບົກ (ເຊິ່ງເວລາຕໍ່ມາເຮົາຮຽກວ່າຂະເໝນສູງ ເປັນຄູ່ກັບຄຳວ່າ ຂະເໝນຕ່ຳ ອັນໄດ້ແກ່ພວກເຈນລະນ້ຳ ທີ່ຢູ່ພາກໃຕ້)ນະ ຄອນຫຼວງຂອງພວກເຈນລະບົກ ນີ້ຮຽກວ່າ ໂຄຕະປຸຣະ ຫຼື

ໂຄຕະບູນ ຊຶ່ງນັກປະຫວັດສາດທັງຫຼາຍເຫັນວ່າ ແມ່ນເມືອງທ່າແຂກເກົ່າ ຫຼືເມືອງຫີນບູນ ກໍມີ ຄຳວ່າໂຄຕະປູຣະແປວ່າເມືອງຕາເວັນອອກ.

ຂ. ພາກໃຕ້ຮຽກວ່າ ແຄວ້ນວິດທະຍັດປຸຣະ ຫຼື ວິດທະຍາດປຸຣະ ແຄວ້ນນີ້ມີດິນແດນຢູ່ທີ່ຮາບຕ່ຳແຄມທະເລອັນໄດ້ແກ່ດິນແດນປະເທດຂະເໝນ ແລະຫວຽດນາມໃຕ້ທຸກວັນນີ້ ປະຊາຊົນທີ່ຢູ່ໃນແຄວ້ນນີ້ຮຽກ ວ່າ ເຈນລະນ້ຳ ຫຼື ຂະເໝນຕ່ຳ ນັ້ນເອງ. ນະຄອນຫຼວງຂອງແຄວ້ນ ນີ້ຮຽກວ່າ ອັງກໍບໍເຣ ນະຄອນນີ້ກ່າວວ່າ ຕັ້ງຢູ່ແຖວເມືອງສວາຍຈຮຽງ ຕໍ່ຫວຽດນາມໃຕ້ ແຕ່ລາງຄົນກໍບອກວ່າຢູ່ໃຕ້ນະຄອນພະນົມເປັນ ລົງໄປ.

ຊົນຊາດເຈນລະ ທີ່ຈີນກ່າວເຖິງນີ້ ຄືງແມ່ນຊົນຊາດຈາມນັ້ນເອງ ຊາດຈາມນີ້ ກໍແມ່ນຊົນຊາດແຂກອິນເດຍເຜົ່າໜຶ່ງ ອັນເປັນຈຸ້ມເຊື້ອດຽວກັນກັບພວກຊະວາມະລາຢູອິນດູເນເຊຍ ແລະມອນ ຂະເໝນ ທີ່ໄດ້ອົບພະຍົບມາຢູ່ແຫຼມອິນດູຈີນນີ້ ແຕ່ຫຼາຍພັນປີມາແລ້ວ ແລະອົບພະຍົບມາຫຼາຍທີ່ສຸດ ແມ່ນໃນສະໄໝຂອງພຣະເຈົ້າອະໂສກຣາດປົກຄອງ ອິນເດຍໃນລະຫວ່າງ ພ.ສ. 218 ເປັນຕົ້ນມາ.

ຊື່ປະເທດແລະຊື່ຊົນຊາດ ເຈນລະ ຕາມທີ່ກ່າວມານີ້ ແມ່ນພຣະພິກຂຸຈີນອົງໜຶ່ງຊື່ ຝາຫຽນ ໄດ້ບັນທຶກໄວ້ໃນຄາວທ່ານເດີນທາງໄປສືບສາສະໜາໃນປະເທດອິນເດຍ ແຕ່ລະຫວ່າງປີ ພ.ສ. 942-957 (ຄ.ສ.400-415)

ເວລາກັບຄືນຈາກອິນເດຽ ທ່ານໄດ້ຜ່ານກາຍມາ ທາງນີ້.

ຕາມປະຫວັດສາດທີ່ທ່ານຝາຫຽນບັນທຶກໄວ້ນີ້ ເຮົາພໍຈະສັນນິຖານໄດ້ວ່າ ຊົນຊາດຜູ່ເປັນເຈົ້າຂອງຖິ່ນເດີມແຫ່ງດິນແດນລາວຂອງເຮົານີ້ ຄືງແມ່ນພວກຈາມ ຫຼືຂະເໝນ(ຂອມ)ສະນັ້ນຕາມໜັງສືອຸຣັງຄະນິທານຂອງເຮົາກ່າວວ່າ ພວກຂອມແຕກມາຈາກເມືອງໜອງຫານນ້ອຍໜອງຫານຫຼວງ ແລະເມືອງຮ້ອຍເອັດ ຂຶ້ນມາຕັ້ງຢູ່ຕາມແຄມນ້ຳຂອງຈົນ ບຸຣິຈັນໄດ້ມາຕັ້ງວຽງຈັນ ຂຶ້ນເປັນຄັ້ງແຮກນັ້ນ ຈຶ່ງອາດເປັນຄວາມຈິງປະການໜຶ່ງ.

ພຣະພຸດທະສາສະໜາ ແຜ່ເຂົ້າມາໃນອິນດູຈີນໃນໜັງສືອຸຣັງຄະນິທານ ຄືປະຫວັດການສ້າງພຣະທາດພະນົມກ່າວວ່າ ເມື່ອພຣະສັມມາສັມພຸດທະເຈົ້າຂອງເຮົາປະລິນິພານໄດ້ແປດປີປາຍ ພຣະມະຫາກັດສະປະເຖຣະເຈົ້າໄດ້ເອົາອຸຣັງຄະທາດຄືທາດດູກເອິກຂອງພຣະພຸດທະເຈົ້າມາປະດິດສະຖານໄວ້ທີ່ພູກ່ຳພ້າ(ດອຍກະປະນະຄີຣີ) ແລ້ວ ພຣະກະສັດທັງຫ້ານະຄອນ ໄດ້ພ້ອມກັນສ້າງເຈດີບັນຈຸພຣະທາດຫົວເອິກນັ້ນໄວ້ທີ່ພູກ່ຳພ້າ ຄືທາດພະນົມທຸກວັນນີ້ ດັ່ງໄດ້ກ່າວແລ້ວແຕ່ຕົ້ນນັ້ນ. ເລື່ອງນີ້ເປັນເລື່ອງເຫຼືອວິໄສທີ່ຈະຫາຫຼັກຖານມາພິສູດໃຫ້ເຫັນຈິງໄດ້ ເພາະສັກຣາດທີ່ກ່າວໄວ້ສູງເກີນໄປ ແລະພຣະມະຫາກັດສະປະນຳເອົາພຣະອຸຣັງຄະທາດມານັ້ນ ກໍຟັງບໍ່ໄດ້ ຫຼື ບໍ່ມີເຫດການພຽງພໍທີ່ຈະໃຫ້ເຊື່ອໄດ້. ແຕ່ເຫດການທີ່ພຣະພຸດທະ

ສາສະໜາໄດ້ແຜ່ເຂົ້າມາໃນແຫຼມອິນດູຈີນຈົນຕະຫຼອດ ໄດ້ມີການສ້າງພຣະທາດເຈດີຕ່າງໆນັ້ນມີແທ້ ແລະຄົງບໍ່ແມ່ນສະໄໝຂອງພຣະມະຫາກັດສະປະແຕ່ຄົງຈະແມ່ນສະໄໝຂອງພຣະເຈົ້າອະໂສກຣາດເມື່ອລະຫວ່າງພ.ສ. 236 ເປັນຕົ້ນມາ ດັ່ງຈະຂໍນຳເອົາປະຫວັດການເຜີຍແຜ່ພຣະພຸດທສາສະໜາ ແລະການສ້າງພຣະທາດເຈດີຕ່າງໆໃນສະໄໝຂອງພຣະເຈົ້າອະໂສກຣາດ ມາເລົ່າສູ່ຟັງໂດຍສັງເຂບຕໍ່ໄປນີ້.

ການເຜີຍແຜ່ພຸດທະສາສະຫນາຄັ້ງຍິ່ງໃຫຍ່ ໃນໜັງສື ສັງຄີຕິກະຖາ ແລະໃນໜັງສື ຄຳພີມະຫາວົງ ພົງສາວະດານລັງກາ ກ່າວໄວ້ວ່າ"ເມື່ອພ.ສ. ລ່ວງໄດ້ 218 ປີ ເຈົ້າອະໂສກກຸມມານ ໄດ້ປາບດາພິເສກຂຶ້ນເປັນພຣະເຈົ້າແຜ່ນດິນ ສະເຫວີຍລາຊະສົມບັດຢູ່ ນະຄອນປາຕະລີບຸດ ໃນປະເທດອິນເດຍ ທົງພຣະນາມວ່າ ພຣະເຈົ້າ ອະໂສກມະຫາຣາດ ຫຼື ຕາມທີ່ຄົນລາວເຮົາຮຽກວ່າ ພຣະຍາສຣີທັມມະອະໂສກ ພຣະອົງເປັນກະສັດຜູ້ມີອານຸພາບຍິ່ງໃຫຍ່ທີ່ສຸດໃນສະໄໝນັ້ນ ຄັນຕໍ່ມາພຣະອົງໄດ້ເຂົ້ານັບຖືພຣະພຸດທະສາສະຫນາ ມີສັດທາທຳບຸນໃຫ້ທານເປັນອັນມາກ ຈົນຄົນໃນອິນເດຍສະໄໝນັ້ນອອກບວດນັບເປັນລ້ານໆ ພວກທີ່ບວດນັ້ນລາງພວກບວດເພື່ອອາໄສກິນຂອງທານ ທີ່ພຣະຍາອະໂສກຣາດ ທົງສະຫຼະວັນລະຫຼາຍແສນຄຳ ຈຶ່ງເກີດມີພຣະພິກຂຸອະລັດຊີຂຶ້ນເປັນອັນມາກ ພຣະສົງທັງຫຼາຍ

ອົງເປັນອໍຣະຫັນເຫັນດັ່ງນັ້ນ ຈຶ່ງໄດ້ພ້ອມກັນທຳສັງຄາຍະນາ ຄືຊຳຣະສະສາງພຣະທັມມະວິໄນ ໃຫ້ເປັນລະບຽບອັນໜຶ່ງອັນດຽວກັນ ຖືກຕ້ອງຕາມທີ່ພຣະພຸດທະເຈົ້າໄດ້ທົງສອນໄວ້ ກຳຈັດພິກຂຸຜູ່ປອມບວດນັ້ນເສຽ.

ການທຳສັງຄາຍະນາຄັ້ງນີ້ ນັບເປັນຄັ້ງທີສາມ ນັບແຕ່ພຣະພຸດທະເຈົ້າ ປະລິນິພານມາ ໂດຍແມ່ນພຣະເຈົ້າອະໂສກມະຫາຣາດນັ້ນເອງ ເປັນຜູ່ອຸປະຖຳຄ້ຳຊູໃຫ້ຄວາມສະດວກທຸກປະການ ຄັນເມື່ອໄດ້ກະທຳສັງຄາຍະນາສະສາງພຣະທັມມະວິໄນ ໃຫ້ເປັນທີ່ຖືກຕ້ອງແລ້ວ ພຣະຍາອະໂສກຣາດ ຈຶ່ງໄດ້ຈັດການສົ່ງພຣະສົງອົງສຳຄັນໆ ອອກໄປເຜີຍແຜ່ພຣະພຸດທະສາສະຫນາໃນນາໆ ປະເທດເຖິງ 8 ຄະນະ ຫຼື 8 ປະເທດ ທີ່ສຳຄັນ ໃນເວລານັ້ນ. ຄະນະສົງ 8 ຄະນະນັ້ນ ຄະນະທີ່ໄດ້ມາເຜີຍແຜ່ໃນດິນແດນແຫຼມອິນດູຈີນ ຄືປະເທດສຸວັນນະພູມ ມີພຣະໂສນະກັບພຣະອຸຕຣະ ເປັນຫົວໜ້າ.

ໃນການສົ່ງສະມະນະທູດ ອອກໄປເຜີຍແຜ່ພຣະພຸດທະສາສະໜາຄາວນີ້ ພຣະຍາອະໂສກຣາດ ໄດ້ສົ່ງຂ້າລາຊະການ ຫຼື ທູຕານຸທູດໄປ ພ້ອມ ແລະມີພຣະລາຊະອາດຍາໃຫ້ທູດເຫຼົ່ານັ້ນໄປຊັກຊວນອວນເຈົ້າເມືອງທັງຫຼາຍໃນປະເທດຕ່າງໆ ໃຫ້ພາກັນສ້າງວັດ ແລະພຣະທາດເຈດີ ໄວ້ໃຫ້ໄດ້ 84000 ລູກ ຄົບຕາມຈຳນວນພຣະທັມຄຳສອນຂອງພຣະພຸດທະ ອົງເຊິ່ງມີ 84000 ພຣະທັມມະຂັນ.

ໃນໜັງສືເລື່ອງ ພຣະອຸບປະຄຸດ ຜາບພຣະຍາມານ ກ່າວໄວ້ວ່າ ເມື່ອພຣະຍາອະໂສກຣາດມີພຣະລາຊະອາດຍາ ໃຫ້ປະເທດຕ່າງໆ ສ້າງພຣະເຈດີໃຫ້ໄດ້ 84000 ລູກນັ້ນ ພຣະອົງໄດ້ໄປຂຸດຄົ້ນເອົາ ພຣະບໍຣົມສາຣີຣິກກະທາດຂອງພຣະພຸດທະເຈົ້າ ອັນພຣະຍາອະຊາດສັດຕູ ກັບພຣະມະຫາກັດສະປະ ຝັງເອົາໄວ້ ທີ່ເມືອງລາຊະຄຶ ອອກແຈກຢາຍໄປບັນຈຸໄວ້ໃນພຣະເຈດີເຫຼົ່ານັ້ນໃຫ້ຄົບຖ້ວນ. ນັບແຕ່ວັນພຣະອົງໄດ້ສົ່ງສະມະທູດ ແລະທູດອອກໄປເຜີຍແຜ່ພຣະພຸດທະສາສະໜາ ແລະສ້າງພຣະທາດເຈດີນັ້ນສັ່ງເວລານານໄດ້3ປີ, ການສ້າງເຈດີໃນປະເທດຕ່າງໆຈຶ່ງສຳເລັດບໍລະບວນ ຄັນແລ້ວພຣະອົງ ຈຶ່ງໄດ້ຈັດທຳບຸນສະຫຼອງພຣະທາດເຈດີເຫຼົ່ານັ້ນ ໃຫ້ພ້ອມກັນທຸກໆເມືອງໂຮມທັງພຣະມະຫາເຈດີສັນຈີ ຢູ່ທີ່ວັດອະໂສກາຣາມ ໃນເມືອງປາຕະລີບຸດນັ້ນດ້ວຍ. ໃນການທຳບຸນສະຫຼອງພຣະທາດນີ້ ພຣະອົງໄດ້ທຳຢູ່ ເຖິງ 7 ປີ 7 ເດືອນ ແລະສະຫຼະພຣະລາຊະຊັບອອກທານ ນັບແຕ່ການສ້າງພຣະທາດເຈດີມາຕະຫຼອດຈົນ ທຳບຸນສະຫຼອງສັ່ງພຣະ ລາຊະຊັບໄປທັງໝົດ 96 ໂກດຫຼຽນຄຳ ແລະໃນການທຳບຸນສະຫຼອງ ຄາວນີ້ພຣະຍາອະໂສກຣາດໄດ້ມອບໝາຍໃຫ້ ພຣະອຸບປະຄຸດຕະເຖຣະ ອົງອໍຣະຫັນເປັນປະທານກຳມະການອຳນວຍການ ແລະຮັກສາຄວາມສະຫງົບ. ການບຸນສະຫຼອງຄາວນັ້ນ ຈຶ່ງລຸລ່ວງໄປດ້ວຍດີ ໂດຍບໍ່ມີເຫດຮ້າຍອັນໃດມາຂັດ

ຂວາງ (ພຣະຍາມານມາຂັດຂວາງບໍ່ໄດ້).

ການເຜີຍແຜ່ພຣະພຸດທະສາໜາ ຄັ້ງຍິ່ງໃຫຍ່ ແລະ ການກໍ່ສ້າງພຣະທາດເຈດີຄັ້ງສຳຄັນ ເຊິ່ງມີຈຳນວນເຖິງ 84000 ລູກ ອັນມີກ່າວໄວ້ໃນ ຄັມພີສັງຄີຕິກະຖາ ແລະໃນ ຕຳນານພຣະອຸບປະຄຸດຕະດັ່ງກ່າວມານີ້ ເປັນທາງສັນນິຖານໄດ້ແນ່ນອນວ່າ ພຣະພຸດທະສາສະໜາໄດ້ແຜ່ຜາຍເຂົ້າມາໃນດິນແດນສຸວັນນະພູມ ຄືແຫຼມອິນດູຈີນ ອັນເປັນປະເທດລາວເຮົາໂຮມທັງປະເທດໄທ ປະເທດຂະເໝນ ແລະຫວຽດນາມໃຕ້ ແຕ່ໃນຄາວພຣະຍາອະໂສກຣາດນັ້ນແທ້ ເພາະວ່າຫລັກຖານທີ່ຄວນອ້າງ ໄດ້ນັ້ນມີ:

1. ພຣະປະຖົມເຈດີ ຄືທາດເມືອງນະຄອນປະຖົມ ຢູ່ປະເທດໄທ ເພິ່ນຂຸດ ໄດ້ວັດຖຸບູຮານ ຮູບພຣະທັມມະຈັກເຮັດດ້ວຍຫີນ ເປັນຂອງສ້າງຂຶ້ນ ໃນສະໄໝພຣະຍາອະໂສກຣາດແທ້ ນອກຈາກຫີນພຣະທັມມະຈັກແລ້ວ ເພິ່ນຍັງຂຸດໄດ້ແຜ່ນສິລາຈາລຶກຄຳເວົ້າຂອງພຣະອັດສະຊິເຖຣະສາວົກຮຸ່ນແຮກຂອງພຣະສັມມາສັມພຸດທະເຈົ້າຄືພິກຂຸປັນຈະວັກຄີ ທີ່ໄດ້ກ່າວຕໍ່ພຣະສາຣີບຸດ ເມື່ອຍັງບໍ່ທັນໄດ້ບວດວ່າ:

ເຢ ທັມມາ ເຫຕຸປປະພະວາ
ເຕສັງ ເຫຕຸງ ຕະຖາຄະໂຕ (ອາຫະ)
ເຕສັນໂຈ ໂຍ ນິໂຣໂທ ຈະ
ເອວັງ ວາທີ ມະຫາສະມະໂນ

ຕົວອັກສອນທີ່ຈາລຶກພຣະທັມມະບົດນີ້ ເປັນຕົວອັກສອນຄະຣິນ ຫຼື ອັກສອນເທວານະຄະຣີ ທີ່ໃຊ້ຢູ່ໃນສະໄໝຂອງພຣະຍາອະໂສກຣາດ ນັ້ນເອງ. ສິລາຮູບພຣະທຳມະຈັກນີ້ນອກຈາກຂຸດໄດ້ໃນບໍລິເວນພຣະທາດ ປະຖົມເຈດີແລ້ວ ເພິ່ນຍັງຂຸດໄດ້ຢູ່ບໍຣິເວນໃກ້ຄຽງແຂວງນະຄອນລາຊະສີມາອີກ.

2. ຮູບລິງລາຍທີ່ປະດັບຕາມອົງພຣະເຈດີເກົ່າ ແລະ ຮູບຊົງຂອງທາດ ດັ່ງທາດພະນົມ ເປັນຕົ້ນ ນັກປາດທາງບູຮານຄະດີ ທັງຫຼາຍກໍລົງ ຄວາມເຫັນວ່າ ເປັນຮູບລິງລາຍແບບດຽວກັນ ກັບລາຍຂອງສີມືຊ່າງ ສະໄໝພຣະເຈົ້າອະໂສກຣາດ.

3. ໃນທາງສັງເກດ ເພິ່ນເຫັນວ່າ ຕາມພຣະທາດເກົ່າໆ ເພິ່ນມັກໄດ້ຈອບ ພຣະທັມຄຳສອນບົດວ່າ: ເຍ ທັມມາເຫຕຸປປະພະວາ…" ນີ້ສະເໝີ ຢູ່ໃນທາດຫຼວງວຽງຈັນກໍໄດ້ເຫັນພຣະທັມບົດນີ້ຄືກັນ ແຕ່ເພິ່ນຈາລຶກໃສ່ໃບລານທີ່ເຮັດດ້ວຍຄຳແລະຕົວອັກສອນເປັນຕົວອັກສອນທັມ ໃຊ້ຢູ່ໃນປະເທດລາວ.

**ຂ້າພະເຈົ້າຜູ້ຂຽນກໍເຄີຍເຫັນໃບລານຄຳນີ້ ໃນຄາວເພິ່ນແປງພຣະທາດ ຫຼວງເມື່ອປີ ຄ.ສ. 1930.**

4. ໃນໜັງສືນິທານຂຸນບູຣົມ ອັນເປັນພົງສາວະດານດັ້ງເດີມຂອງລາວ ກ່າວເຖິງຕອນທີ່ ພຣະມະຫາປາສະມັນຕະນຳເອົາພຣະບາງຂຶ້ນມາ ເມືອງລາວເມື່ອປີ ພ.ສ.1902 ພໍມາເຖິງວຽງຈັນ ພຣະມະຫາປາສະມັນຕະໄດ້ເອົາຕຳລາອັນເກົ່າແກ່ມາແຕ່ນະຄອນຫຼວງອັງກໍທົມ ອອກມາອ່ານເບິ່ງ ແລ້ວຊີ້ແຈງໃຫ້ຊາວລາວວຽງຈັນຮູ້ວ່າ ທາດອັນມາຕົກເມືອງສຸວັນນະພູມປະເທດ ທີ່ຫຼັກຫີນເປັນເຄົ້າ ເມື່ອພຣະຍາສຣີທັມມາໂສກຣາດ ໃຫ້ພຣະອໍຣະຫັນຕາເຈົ້າທັງຫຼາຍເອົາທາດມາຕົກໃນເມືອງອັນນີ້ ທີ່ໜຶ່ງວ່າ ກູ່ພຣະທາງທີ່ນີ້ເປັນເຄົ້າ, ທີ່ໜຶ່ງວ່າ ພຣະນາຣາຍ, ທີ່ໜຶ່ງວ່າ ພຣະສາດ, ທີ່ໜຶ່ງວ່າ ພຣະຊຽນ, ທີ່ໜຶ່ງວ່າ ພຣະນາຫຽນ, ສອງທີ່ນີ້ ຢູ່ເມືອງຂວາງໂລກະບານ ທີ່ໜຶ່ງວ່າ ພະນົມ (ຄືງແມ່ນທາດພະນົມ) ທີ່ 1 ວ່າໂພນຝັງແດດ(ຈະແມ່ນທາດຫຼວງ ຫຼືບໍ່) ອັນທີ່ປາກປ່າສັກກຳ້ໃຕ້ ເຈົ້າລັດສີໃສ່ທາດອູບໄມ້ຈັນໄວ້ນັ້ນ ທາດພຣະເຈົ້າທັງ 4 ຢູ່ໃນອູບແກ້ວທັງ 4 ລູກຈຶ່ງອະທິດ ຖານໄວ້ຫັ້ນ ແລ...” ດັ່ງນີ້.

ພຣະບໍຣົມສາຣີຣິກະທາດ ຂອງພຣະພຸດທະເຈົ້າທີ່ພຣະຍາອະໂສກຣາດ ໃຫ້ພຣະອໍຣະຫັນນຳເອົາມາສ້າງເຈດີກວມໄວ້ທັງ 6 ບ່ອນຕາມທີ່ພຣະມະຫາປາສະມັນຕະເຖຣະ ກ່າວໄວ້ນີ້ ບໍ່ຮູ້ວ່າແມ່ນຢູ່ບ່ອນໃດແທ້ ບ່ອນພໍຈະສັນນິຖານໄດ້ ກໍເຫັນຈະແມ່ນທາດພະນົມ, ແຕ່ເຖິງ

ຢ່າງນັ້ນກໍດີ ຕາມຂໍ້ ພິສູດທັງ 4 ຂໍ້ ທີ່ກ່າວມານີ້ ກໍເປັນທາງ ໃຫ້ສັນນິຖານໄດ້ແລ້ວວ່າ ພຣະພຸດທະສາສະໜາ ແລະ ພຣະບໍຣົມທາດຂອງພຣະພຸດທະເຈົ້າໄດ້ແຜ່ຜາຍເຂົ້າມາ ໃນດິນແດນລາວນີ້ ແຕ່ຄັ້ງພຣະເຈົ້າອະໂສກຣາດ ຄືໃນລະ ຫວ່າງ ພ.ສ. 218 ນັ້ນແທ້. ສະນັ້ນຕາມນິທານອຸຣັງຄະ ທາດທີ່ກ່າວວ່າພຣະເຈົ້າ ຈັນທະບຸຣີ ປະສິດທິສັກ ເຈົ້ານະ ຄອນວຽງຈັນຄົນແຮກພ້ອມດ້ວຍພຣະອໍຣະຫັນ 5 ອົງໄດ້ ສ້າງພຣະທາດຫຼວງຂຶ້ນເປັນຄັ້ງແຮກນັ້ນ ຈຶ່ງອາດເປັນ ຄວາມຈິງ ແລະກໍຄົງສ້າງໃນສະໄໝຂອງພຣະຍາອະໂສກ ຣາດ ນັ້ນເອງ.

## 8. ປະເພນີບຸນນະມັດສະການພຣະທາດຫຼວງ

ປະເພນີບຸນນະມັດສະການພຣະທາດຫຼວງນີ້ໄດ້ ເຮັດສືບຕໍ່ກັນມາແຕ່ບູຮານການ ໂດຍມີພຣະມະຫາກະ ສັດອົງເປັນປະມຸກຂອງຊາດ ຊົງເປັນປະທານ (ຕົກມາຮອດ ສະໄໝປ່ຽນແປງເປັນລະບອບສາທາລະນະລັດ ໃນປີ 1975 ແລ້ວ ພັກແລະລັດຖະບານກໍບໍ່ໄດ້ລົດລະສືບຕໍ່ການ ປະຕິບັດຕາມຮີດຄອງ ປະເພນີມາເລື້ອຍໆ)ຈຶ່ງນັບວ່າ ບຸນ ນະມັດສະການພຣະທາດຫຼວງນີ້ ເປັນບຸນຂອງຫຼວງຂອງ ລັດ ເປັນບຸນທີ່ປະມຸກຄືເຈົ້າແຜ່ນດິນ ຫຼື ຂັ້ນນໍາ ເປັນປະ ທານນໍາພາ ຈຶ່ງນັບເປັນປາງບຸນລາຊະການ ຫຼື ລັດຖະການ ໂດຍແທ້ ຕັ້ງແຕ່ໄດ້ສ້າງພຣະທາດລູກນີ້ເປັນຕົ້ນມາ, ຫຼັກ

ຖານທີ່ອ້າງອີງໃຫ້ຮູ້ໄດ້ ໃນໄລຍະຕໍ່ມາມີດັ່ງນີ້:

ເມື່ອປີ ພ.ສ. 2164 (ຄ.ສ.1641) ສົມເດັດພຣະເຈົ້າສຸຣະຍະວົງສາ ທັມມິກະຣາດ ພຣະມະຫາກະສັດ ແຫ່ງນະຄອນວຽງຈັນ ໄດ້ສະເດັດອອກໄປຮັບຕ້ອນ ທ່ານວັນວຸດສະຕົບ ອັກຄະລາຊະທູດຊາວໂຮນລັງ ຢູ່ທີ່ກົມມະລຽນພຣະທາດຫຼວງ ໃນປາງບຸນນະມັດສະການພຣະທາດຫຼວງ ເມື່ອວັນທີ 16 ພຶດສະຈິກາ(16 ໂນວາມ ຄ.ສ.1641) ຕາມຈົດໝາຍ ບັນທຶກຂອງທ່ານວັນ ວຸດສະຕົບ ນີ້ ທ່ານຍັງໄດ້ກ່າວໄວ້ວ່າ "ເມື່ອກັບຈາກງານນະມັດສະການພຣະທາດຫຼວງແລ້ວກໍໄດ້ມາເບິ່ງການໄຫຼເຮືອ ໄຟຢູ່ແມ່ນ້ຳຂອງອີກ ແລະໃນການໄຫຼເຮືອໄຟແລະຊ່ວງເຮືອນີ້ ພຣະເຈົ້າແຜ່ນດິນກໍໄດ້ສະເດັດໄປເປັນປະທານ"ອັນນີ້ສະແດງໃຫ້ເຫັນ ວ່າແຕ່ກ່ອນ ເພິ່ນເຮັດບຸນໄຫຼເຮືອໄຟ(ຫຼື ລອຍກະທົງ) ໃນຄາວດຽວກັນກັບບຸນນະມັດສະການພຣະທາດຫຼວງ ແຕ່ໃນດຽວນີ້ ເຮົາເຮັດບຸນໄຫຼເຮືອໄຟ ໃນວັນເດືອນ 11 ເພັງ ສ່ວນບຸນນະມັດສະການພຣະທາດຫຼວງ ເຮັດໃນວັນເດືອນ12 ເພັງຕາມເດີມ.

ການເຮັດບຸນພຣະທາດໃນວັນເດືອນ 12 ເພັງນີ້ ຄົງເຮັດຕາມແບບ ຢ່າງພຣະເຈົ້າອະໂສກຣາດ ພາເຮັດມາຕັ້ງແຕ່ເດີມ ໃນຄາວທີ່ພຣະອົງໃຫ້ ສ້າງພຣະເຈດີ 84000 ລູກ ແລ້ວທຳບຸນສະຫຼອງພ້ອມໆກັນ ເພາະຕາມທີ່ໄດ້ສັງເກດເຫັນ ການເຮັດບຸນນະມັດສະການພຣະທາດທັງຫຼາຍໃນ

ປະເທດໄທ ເຊັ່ນບຸນໄຫວ້ທາດປະຖົມເຈດີ ໄຫວ້ທາດພູເຂົາທອງໃນກຸງເທບ ກໍດີກໍເຮັດໃນເດືອນ12 ເພັງ. ບຸນນະມັດສະການພຣະທາດພະນົມ ແຕ່ກ່ອນກໍໄດ້ຍິນວ່າເຮັດໃນວັນເດືອນ12 ເພັງຄືກັນ ຫາກໍມາປ່ຽນເປັນເດືອນ 3 ເພັງເມື່ອໄວໆມານີ້ ທັງນີ້ກໍຍ້ອນລັດຖະບານໄທຄຶດເຫັນວ່າຢາກໃຫ້ຄົນທາງພາກກາງໄດ້ມີໂອກາດມານະມັດສະການພຣະທາດພະນົມດ້ວຍ ເພາະຖ້າເຮັດວັນດຽວກັນໝົດຜູ່ປະສົງຈະໄປນະມັດສະການພຣະທາດ ຕ່າງໆໃນວັນເດືອນ 12 ເພັງນັ້ນ ຄົງບໍ່ມີໂອກາດມານະມັດສະການ ພຣະທາດພະນົມໄດ້.

## ພິທີການບຸນ

ພິທີການບຸນພຣະທາດຫຼວງ ທີ່ຈະກ່າວຕໍ່ໄປນີ້ ກ່າວຕາມລາຍການ ບຸນນະມັດສະການພຣະທາດຫລວງ ປີ ພ.ສ. 2509 (ຄ.ສ.1966) ມີດັ່ງຕໍ່ໄປນີ້:

ວັນເດືອນ 12 ຂຶ້ນ 13 ຄໍ່າ ຕອນຄໍ່າ ຂ້າລາຊະການພົນລະເຮືອນ ທະຫານ ຕໍາຫຼວດ ແລະປະຊາຊົນ ອັນມີເຈົ້າແຂວງກໍາແພງເປັນປະທານ ແຫ່ຜາສາດເຜີ້ງໄປທອດວັດສີເມືອງແລ້ວ ມີການຄົບງັນຕະຫຼອດຄືນ ຢູ່ທີ່ວັດສີເມືອງນັ້ນ.

ວັນຂຶ້ນ 14 ຄໍ່າ ຕອນເຊົ້າ ທໍາພິທີດື່ມນໍ້າພຣະພິພັດທະສັດຈາ(ນໍ້າສາບານ) ຢູ່ສິມວັດອົງຕື້ ຜູ່ທີ່ເຂົ້າຮັບນໍ້າ

ສາບານ ແມ່ນນັບແຕ່ບັນດາຂ້າລາຊະການຊັ້ນຫົວໜ້າຂຶ້ນ ໄປເຖິງຄະນະລັດຖະມົນຕີ ທະຫານ ຕໍາຫຼວດ ແຕ່ຊັ້ນນາຍ ຮ້ອຍທີ່ປະຈໍາຢູ່ໃນວຽງຈັນ ແລະພວກພໍ່ບ້ານ ຕາແສງຂຶ້ນ ໄປເຖິງເຈົ້າແຂວງ, ເຈົ້າແຜ່ນດິນສະເດັດມາເປັນປະທານ ການແຕ່ງຕົວເຕັມຍົດ ປະດັບຫຼຽນກາລາຊະອິດສະລິຍະ ພອນ.

ຕອນບ່າຍ 2 ໂມງ ຂ້າລາຊະການ ພໍ່ບ້ານ ຕາແສງ ເຈົ້າເມືອງ ແລະປະຊາຊົນ ຕັ້ງຂະບວນແຫ່ຜາສາດເຜິ້ງ ອອກໄປທາງທາດຫຼວງ ເວລາບ່າຍ 3 ໂມງ ເຈົ້າແຜ່ນດິນ ສະເດັດອອກໄປນະມັດສະການພຣະທາດ ພ້ອມດ້ວຍ ຂ້າລາຊະການບໍລິວານ, ໃນການນີ້ໄດ້ມີ ການແຫ່ຜາສາດ ເຜິ້ງໃນບໍລິເວນກົມມະລຽນອ້ອມພຣະທາດ, ຂ້າລາຊະ ການທະຫານ ຕໍາຫຼວດແຕ່ງຕົວເຕັມຍົດ ປະດັບຫຼຽນກາຄໍາ ຊອບ.

ວັນຂຶ້ນ 15 ຄ່ໍາ ຕອນເຊົ້າມີການຕັກບາດຢູ່ທາດຫຼວງ ເຈົ້າແຜ່ນດິນ ສະເດັດໄປຕັກບາດ ພ້ອມດ້ວຍເສນາຂ້າລາ ຊະການຜູ້ໃຫຍ່ ແລະລາຊະບໍລິວານບັນດາທູຕານຸທູດ ເຂົ້າ ເຝົ້າເຈົ້າແຜ່ນດິນຢູ່ທາດຫຼວງໃນວັນນີ້ແລ້ວ ເຈົ້າແຜ່ນດິນ ສະເດັດກັບຄືນໃນເມືອງ.

ເວລາບ່າຍ 1 ໂມງ ເຈົ້າແຜ່ນດິນສະເດັດອອກໄປ ທາດຫຼວງອີກ ເພື່ອທອດພະເນດການກິລາຕາມປະເພນີ,

ການກິລາປະເພນີນັ້ນ ມີການຊ່ວງມ້າແລະຕີຄີ. ການຕີຄີນັ້ນແຕ່ດັ້ງເດີມແທ້ ເຂົ້າໃຈວ່າເປັນການກິລາບູຮານທີ່ມີການແຂ່ງຂັນຢ່າງດຽວກັນ ກັບການຫຼິ້ນເຕະບານໃນເວລານີ້ ເພາະຈຸດຕັ້ງຕົ້ນຕີ ວາງລູກຄີໄວ້ບ່ອນສູນກາງ ຄືກັບເຕະບານ. ຈຸດໃຈກາງ ບ່ອນວາງລູກຄີນີ້ຮຽກວ່າ "ພອກ", ຄ້ອນສຳລັບຕີຄີນັ້ນ ແຕ່ບູຮານແທ້ຂົດທາງຫົວຄ້ອນໃຫ້ງໍ ຄ້າຍຄືສົ້ນຄັນຈ້ອງ ສຳລັບໄວ້ເກາະລູກຄີເຕາະໄປ, ລູກຄີນັ້ນເຮັດດ້ວຍໄມ້ຊະນິດເບົາໆ. ກິລາຕີຄີແບ່ງເປັນສອງຝ່າຍຈຳນວນ ຝ່າຍລະທໍ່ໃດບໍ່ຈຳກັດ ແຕ່ໃຫ້ມີຈຳນວນທໍ່ໆກັນ ແລະຝ່າຍຫນຶ່ງສົມມຸດວ່າ ເປັນຝ່າຍຂ້າລາຊະການ ຫຼື ຝ່າຍປົກຄອງ, ພວກນີ້ນຸ່ງເສື້ອແດງ. ອີກຝ່າຍໜຶ່ງ ສົມມຸດວ່າເປັນປະຊາຊົນ (ຜູ່ຢູ່ພາຍໃຕ້ການປົກຄອງ) ພວກນີ້ນຸ່ງເຄື່ອງຕາມມີຕາມເກີດ. ການແຂ່ງຂັນກັນນັ້ນ ກຳໜົດສາມຍົກ ແພ້ແລະເສຽກັນ ດ້ວຍການຕີລູກຄີໃຫ້ກາຍເຂດຂອງກັນ ຄືກັນກັບການເຕະບານ. ແຕ່ກ່ອນຈະລົງມືຕີຄີຕ້ອງທຳພິທີແຫ່ລູກຄີ ແລະຄ້ອນຄີອອກມາຈາກບໍລິເວນພຣະທາດ ແລະເມື່ອຈະຕີ ຕ້ອງໃຫ້ອາດຍາສິດຄືເຈົ້າເມືອງ ຫຼື ຜູ່ໃດຜູ່ນຶ່ງ ເຊິ່ງເປັນປະທານໃນການຈັດບຸນນີ້ ເປັນຜູ່ເຊ່ງລູກກ່ອນ ດັ່ງດຽວກັນ ກັບພິທີເຕະບານ.

ພິທີອີກອັນໜຶ່ງແມ່ນແຫ່ຜາສາດເຜີ້ງຖວາຍພຣະທາດຫຼວງ ແລະຂະບວນແຫ່ປະຊາຊົນຂະມຸທັ່ງບັ້ງ. ບັ້ງທີ່ຊາວຂະມຸເອົາມາທັ່ງນີ້ ຄືງເປັນເຄື່ອງດົນຕີຊະນິດໜຶ່ງ

ປະຈຳເຜົ່າທີ່ມີມາແຕ່ບູຮານ ເຮັດດ້ວຍໄມ້ປ່ອງ (ໄມ້ເຮັ້ຽ ຫຼື ໄມ້ພາງ) ມີຫຼາຍແບບ, ເວລາແຫ່ຈັບສົ້ນໄມ້ທັ່ງລົງດິນ ບັ້ງໄມ້ ຫລືໄມ້ທີ່ເຮັດເປັນເຄື່ອງເສບນັ້ນ ຈະເກີດສຽງດັງປຸ່ງ ປົ່ງກັ້ບໆແກ້ັບໆ ສະຫຼັບກັນໄປ. ເຄື່ອງເສບຂອງຊົນເຜົ່າ ຂະມຸ ດັ່ງກ່າວນີ້ໄດ້ຍິນຮຽກກັນວ່າ"ເກົ່ງໆ" ແລະການເສບ ເກົ່ງນີ້ຮຽກວ່າ "ຕ່ອຍເກົ່ງໆ) ຫຼື ຕີກັບ, ດັ່ງມີຄຳກອນບົດ ໜຶ່ງວ່າ "(ຂ້າ)ຂະມຸທັ່ງບັ້ງ ຕ່ອຍເກົ່ງຕີກັບ". ຕາມປະເພນີ ເດີມ ເຂົ້າໃຈວ່າ ການບຸນພຣະທາດຫຼວງນີ້ ເຈົ້າແຜ່ນດິນຄົງ ຈະເກນເອົາພວກ ນັກເສບຊ່າງຕ່າງໆ ທີ່ມີຢູ່ໃນພຣະລາຊະ ອານາຈັກມາສະແດງການເສບການຟ້ອນ ແລະການກິລາ ຕາມປະເພນີຂອງໃຜລາວໃຫ້ປະຊາຊົນໄດ້ທັດສະນາ.

ທຸກວັນນີ້ບໍ່ມີເຜົ່າຂະມຸທີ່ແທ້ຈິງແລ້ວຈຶ່ງເກນເອົາຄົນ ລາວນັ້ນເອງມາແຕ່ງຕົວເປັນເຜົ່າຂະມຸ ແລະສະແດງການ ຕ່ອຍເກົ່ງນີ້ແທນ. ແຕ່ກ່ອນໆມາພຸ້ນໄດ້ຍິນວ່າ ເພິ່ນເກນ ເອົາປະຊາຊົນເຜົ່າຂະມຸ ບ້ານນ້ຳສັງນ້ຳຕອນໃຫ້ມາສະ ແດງ.

ນອກຈາກການກິລາບູຮານດັ່ງກ່າວມານີ້ແລ້ວ ປັດຈຸ ບັນນີ້ການບຸນທາດຫຼວງໄດ້ຈັດຂຶ້ນຕາມສະໄໝເວລາ ມີ ການອອກຕະຫຼາດນັດ ແລະປະກວດຮ້ານສິນຄ້ານາໆຊະ ນິດ ຕະຫຼອດຮອດການລະຫລິ້ນຕ່າງໆ ຢ່າງພິລຶກກຶກກື ເປັນອັນມາກ ເຊັ່ນການພະນັນ ການແລ່ນລົດໄຕ່ຖັງ ມາ

ຈາກປະເທດໄທ ແລະການສະແດງດົນຕີ ແລະສາຍຮູບເງົາຕ່າງປະເທດ.

ໃນຄືນ 15 ຄ່ຳ ທີ່ມີການແຫ່ຜາສາດເຜີ້ງໃນບໍລິເວນພຣະທາດຫຼວງນັ້ນ ກໍມີການແຫ່ຜາສາດເຜີ້ງຖວາຍພຣະທາດຢູ່ວັດໄຕໃຫຍ່ຄືກັນ. ວັດໄຕໃຫຍ່ແຕ່ເດີມນັ້ນ ຕັ້ງຢູ່ບ່ອນໂຮງການ(ເດີ່ນບິນ) ການບິນທະຫານທຸກວັນນີ້, ເມື່ອຈັດການສ້າງເດີ່ນຍົນວັດໄຕນີ້ຂຶ້ນທາງການຝຣັ່ງຈຶ່ງໄດ້ຍ້າຍວັດມາຕັ້ງໃໝ່ບ່ອນວັດໄຕໃຫຍ່ທຸກວັນນີ້. ວັດໄຕໃຫຍ່ມີຄວາມສຳຄັນກ່ຽວກັບພຣະທາດຫຼວງຢ່າງໃດຈຶ່ງໄດ້ມີການຖວາຍຜາສາດເຜີ້ງໃນວັນດຽວກັນ? ເລື່ອງນີ້ ຍັງຊອກປະຫວັດນິທານບໍ່ທັນໄດ້.

ຕໍ່ມາໃນວັນແຮມ 1 ຄ່ຳ ເດືອນ 12 ກໍມີການແຫ່ຜາສາດເຜີ້ງຖວາຍວັດອົງຕື້ ແລະວັດອິນແປງອີກ. ຂະບວນແຫ່ຂະມຸທັ່ງບັ້ງກໍໄດ້ມາແຫ່ທີ່ວັດອົງຕື້ ອີກຄືກັນ.

## 9. ຄຳໄຫວ້ພຣະທາດ

1. ປຸຣິສມິງ ທິສາພາເຄ ຊິນະຄຸຍທັສສະ ຖາປະນັງ ໂລກະ

ຈຸລະມະນິງ ນາມະ ອະຫັງ ວັນທາມິ ສັພພະທາ
2. ທັກຂະນັສມິງ ທິສາພາເຄ ຊິນະຄຸຍຫັສສະ ຖາປະນັງ
ໂລກະຈຸລະມະນິງ ນາມະ ອະຫັງ ວັນທາມິ ສັພພະທາ
3. ປັຈສິມັສມິງ ທິສາພາເຄ ຊິນະຄຸຍຫັສສະ ຖາປະນັງ
ໂລກະຈຸລະມະນິງ ນາມະ ອະຫັງ ວັນທາມິ ສັພພະທາ
4. ອຸຕຕະຣັສມິງ ທິສາພາເຄ ຊິນະຄຸຍຫັສສະ ຖາປະນັງ
ໂລກະຈຸລະມະນິງ ນາມະ ອະຫັງ ວັນທາມິ ສັພພະທາ

----------

ສຸດເລື່ອງ ຈາກຕົ້ນສະບັບເດີມ

# ພາກ II: ຂໍ້ຄວາມເສີມ

## ການບູລະນະເດີ່ນແລະພິທີການຈັດບຸນ ຫຼັງປີ 1975

ອົງພຣະທາດຫຼວງ ມີປະຫວັດຄວາມເປັນມາດັ່ງທີ່ໄດ້ກ່າວມາແລ້ວ, ບັດນີ້ ຈະຂໍກ່າວເຖິງບໍລິເວນເດີ່ນອ້ອມພຣະທາດຫຼວງ ເຊິ່ງກໍເປັນສົມບັດຮວມ ຂອງຊົນທັງຊາດແຫ່ງນຶ່ງເຊັ່ນກັນ ວ່າໄດ້ມີການປັບປຸງສ້ອມແປງຢ່າງໃດ.

ເດີ່ນພະທາດຫຼວງ ແລະວັດທັງສີ່ທິດເປັນອາພອນປະດັບປາຣະມີພຣະທາດ ມາແຕ່ບູຮານະການ ແລະໃນຍຸກປັດຈຸບັນ ທັງໝົດອານາເຂດນັ້ນ ກໍຍິ່ງມີບົດບາດໂດດເດັ່ນຮອບດ້ານຫຼາຍຂຶ້ນ ບໍ່ວ່າເສດຖະກິດສັງຄົມ ວັດທະນະທັມກໍຄືປະຫວັດສາດ ແລະການເມືອງຂອງຊາດ.

ນັບແຕ່ ປີ 1975 ເປັນຕົ້ນມາ ເດີ່ນດິນທີ່ກວ້າງຂະໜາດຫ້າສິບເຮັກຕາປາຍທີ່ຮາບພຽງດີແລະມີຕົ້ນໄມ້ໃຫ້ຮົ່ມຢູ່ໃນບາງແຈແຫ່ງນີ້ ເປັນແຫຼ່ງເຕົ້າໂຮມພະລັງສັດທາຂອງພຸດທະສາສະນິກ. ໃນແຕ່ລະປີຊາວພຸດລາວ ນັບເປັນໝື່ນໆມາຮ່ວມກັນຕັກບາດຢາດນ້ຳໃຫ້ທານໃນມື້ຂຶ້ນ15 ຄ່ຳ ເດືອນ 12. ເດີ່ນນີ້ຍັງເປັນບ່ອນຈັດພິທີຊາປະນະກິດສົບອັນຊົງກຽດສຳລັບບຸກຄົນສຳຄັນຂອງຊາດທີ່ມະຫາຊົນຈຳນວນຫຼວງຫຼາຍສາມາດເຂົ້າມຮ່ວມໄດ້, ໃນຍາມບຸນ ກໍເປັນບ່ອນຕັ້ງເວທີການສະແດງສິລະປະດົນຕີທີ່ເປີດກວ້າງ

ສຳລັບມະຫາຊົນ, ເປັນຕະຫຼາດນັດສິນຄ້າຫັດຖະກຳຈາກທົ່ວປະເທດ ສິນຄ້າກະສິກຳທ້ອງຖິ່ນຂະໜາດນ້ອຍ ແລະໃຫຍ່, ເປັນແຫຼ່ງຊຸມນຸມມະຫາຊົນ ໃນໂອກາດສຳຄັນແຫ່ງປະຫວັດສາດ ເຊັ່ນມື້ປະກາດໂຄ່ນລົ້ມລະບອບເກົ່າ (23 ສິງຫາ), ມື້ປະກາດສ້າງຕັ້ງ ລະບອບສາທາລະນະລັດ 2 ທັນວາ 1975 ແລະສິ່ງສຳຄັນອີກອັນນຶ່ງ ແມ່ນສະຖານທີ່ທີ່ນັກ ທ່ອງທ່ຽວມັກມາຢ້ຽມຊົມ ເປັນອັນດັບໜຶ່ງ. ວ່າກັນວ່າຖ້າໃຜມາວຽງຈັນຫຼືປະເທດລາວແລ້ວຖ້າບໍ່ໄດ້ມາທາດຫຼວງ ກໍເທົ່າກັບວ່າມາບໍ່ຮອດລາວ.

**1. ບໍລິເວນເດີ່ນ:** ກ່ອນຈະກາຍມາເປັນເດີ່ນສວນສາທາລະນະທີ່ສວຍງາມ ດັ່ງທຸກວັນນີ້ ເດີ່ນພຣະທາດຫຼວງໄດ້ຜ່ານກັບປັບປຸງປົວແປງມາແລ້ວຫຼາຍເທື່ອ. ຮອດປີ 1975 ຍັງເປັນເດີ່ນດິນທຳມະຊາດສີແດງ ຍາມແລ້ງໄງ່ກຸ້ມ ຍາມຝົນເປັນຕົມ,ແຕ່ລະປີໄດ້ມີການຖົມດິນຂຶ້ນຕື່ມຈົນ ຮອດປີ 1988-89 ພາຍຫຼັງການເຈລະຈາສັນຕິພາບກໍລະນີພິພາດສາມບ້ານໃນເມືອງບໍ່ແຕນ(1987)ຍຸຕິລົງໄດ້ໂດຍດີ, ລັດຖະບານຊຸດ ນາຍພົນເອກ ຊາດຊາຍ ຊຸນຫະວັນ ຂອງລາຊະອານາຈັກໄທ ໄດ້ຢ້ຽມຢາມລາວແລະ ຕົກລົງບູລະນະເດີ່ນພຣະທາດຫຼວງໃຫ້ເປັນຂອງຂວັນ. ຊາວນະຄອນຫຼວງວຽງຈັນ,ປະຊາຊົນຄຸ້ມທາດຫຼວງແລະສັດທາວັດໄດ້ຮ່ວມໃຈກໍ່ກຳແພງກັ້ນບໍລິເວນດ້ານນອກແບ່ງເຂດເດີ່ນ

ດ້ານນອກກັບເຂດວັດ.

ນັບແຕ່ຕົ້ນຊຸມປີ 2000 ເປັນຕົ້ນມາ ລັດຖະບານໄດ້ຈັດສັນປົວແປງບໍລິ ເວນເດີ່ນດ້ານໜ້າເຊັ່ນ ຍົກຍ້າຍ ໂຮງໝໍເຂດຖາທິລາດ ແລະເຮືອນບາງ ຫຼັງທີ່ລ່ວງລ້ຳເຂດດິນເກົ່າຂອງວັດອອກໄປ. ເພື່ອກະກຽມເປັນເຈົ້າພາບ ກິລາຊີເກມຄັ້ງທີ 26 ໃນເດືອນພະຈິກປີ 2009 ທີ່ວຽງຈັນ, ລັດຖະບານໄດ້ປັບປຸງເດີ່ນທັງໝົດໃໝ່ປູເບຕົງ ຈັດສັນສວນສາທາລະນະໃຫ້ສວຍງາມ ໃນປີ 2010 ເພື່ອສະເຫຼີມສະຫຼອງ 450 ປີ ນະຄອນຫຼວງວຽງຈັນ, ໜອງສະພັງເລນດ້ານທາງເຂົ້າ(ທິດຕາເວັນຕົກ)ກໍປັ່ງນແປງສະພາບມາເປັນໜອງນ້ຳສະອາດ, ມີການຮື້ຖອນສິ່ງກໍ່ສ້າງທີ່ກີດຂວາງລ່ວງລ້ຳ ເຂດດິນວັດ (ເກົ່າ)ດ້ານທິດຕາເວັນອອກ ແລະກໍ່ທາງເຂົ້າທີ່ກວ້າງຂວາງພ້ອມດຽວກັນ ກໍມີການກໍ່ສ້າງກຳແພງກັ້ນວັດ ແລະດ້ານນອກໃໝ່.

**2. ຫໍທັມມະສະພາເກົ່າ ຫຼື ສາລາພັນຫ້ອງ** ທີ່ສ້າງຂຶ້ນເມື່ອ ພ.ສ.2500 (ຄ.ສ.1957)ໄດ້ເປ່ເພໂທຍດພັງໄປ ລະຫວ່າງຊຸມປາຍປີ 1970 ຈົນ ບໍ່ສາມາດສ້ອມແປງໄດ້. ອົງການພຸດທະສາສະໜາສຳພັນລາວ(ອພສ) ພາຍໃຕ້ການເປັນປະທານຂອງມື້ລາງພຣະອາຈານໃຫຍ່ວິຈິດ ສິງຫະຣາຊ ດ້ວຍທຶນຮອນຂອງລັດຖະບານ ສົມທົບສັດທາຂອງຊາວພຸດທັງພາຍໃນແລະຕ່າງປະເທດ, ຫໍທັມມະສະພາຫຼັງໃໝ່ຂະ

ໜາດມູນຄ່າກວ່າ 45 ຕື້ ກີບກໍໄດ້ ກໍ່ຮ່າງສ້າງຕົວຂຶ້ນ ໃສ່ບໍລິເວນຫຼັງເກົ່າ ພາຍໃຕ້ການບໍລິຫານຄຸ້ມຄອງຂອງກົມສາສະໜາ, ສູນກາງແນວລາວສ້າງຊາດ ທີ່ເປັນເຈົ້າຂອງໂຄງການປຸກສ້າງຫໍທັມມະສະພານີ້ ມາແຕ່ 1999 ຮອດເດືອນຕຸລາ 2010 ການກໍ່ສ້າງໄດ້ສໍາເລັດຮຽບຮ້ອຍ.

## 3. ບຸນທາດຫຼວງໃນ ສະຕະວັດ ທີ XXI

ດ້ວຍວ່າ ອົງພຣະທາດຫຼວງແລະເດີ່ນບໍລິເວນອ້ອມຮອບ ມີຄວາມສໍາຄັນທາງປະຫວັດສາດ ວັດທະນະທັມ ແລະມີທີ່ຕັ້ງທາງພູມສາດທີ່ເໝາະສົມການຈັດບຸນແຕ່ລະປີ ຈຶ່ງຖືກປັບປຸງປ່ຽນແປງໄປ ແລະນັບມື້ນັບຂະຫຍາຍກວ້າງອອກທັງເວລາ(ເປັນເວລາສິບກວ່າມື້)ແລະສະຖານທີ່ໂດຍເຊື່ອມຕໍ່ໄປຍັງສູນການຄ້າລາວໄອເຕັກນັບແຕ່ປີ2004ມາ ໂດຍຍັງຄົງມີຄວາມພະຍາຍາມ ຮັກສາລັກສະນະປະເພນີເກົ່າແກ່ລາງອັນໄວ້ ຄື:

- ການແຫ່ງຜາສາດເຜີ້ງບູຊາພຣະທາດ ແລະວັດອື່ນໆ
- ການຕີຄີ
- ການອອກພານ ຂອງຝ່າຍພຣະສົງ
- ການອອກພານສະແດງສິນຄ້າຂອງທັງພາຍໃນແລະຕ່າງປະເທດ
- ການຕັ້ງເວທີສະແດງສິລະປະມວນຊົນ

ລາຍການພິທີບຸນທາງສາສະໜາ ຕາມທຳນຽມແລ້ວ ບຸນໄຫວ້ພຣະທາດຫຼວງ ມີພິທີທາງສາສະໜາ ຕາມລຳດັບດັ່ງນີ້

1. ມື້ຂຶ້ນ 13 ຄ່ຳ ເດືອນສິບສອງ ເຕົ້າໂຮມຫ້າງຫາຕົກແຕ່ງຜາສາດເຜີ້ງແຫ່ໄປຢູ່ວັດສີເມືອງ ຄົບງັນກັນຢູ່ໜີ້ຄືນນຶ່ງ

2. ມື້ຂຶ້ນ 14 ຄ່ຳ ແຫ່ມາວັດໜອງບອນ, ບ່າຍ 2 ໂມງ ແຫ່ມາພຣະທາດຫຼວງ ຄົບງັນຢູ່ບໍລິເວນອ້ອມທາດຫຼວງ.

3. ມື້ຂຶ້ນ 15 ຄ່ຳ: ຕັກບາດ ຢູ່ໃນກົມມະລຽນ ແລະບໍລິເວນເດີ່ນດ້ານນອກ, ຕາມທຳມະດາມີພຣະສົງ ສາມະເນນເດີນທາງມາຮ່ວມ ຈາກທົ່ວໄປເທດຫຼາຍພັນອົງ (2000--3000)ໂດຍມາພັກເຊົາຢູ່ພາຍໃນກົມມະລຽນ ແລະວັດອ້ອມຂ້າງ.ຄາດວ່າມີຄົນມາຕັກບາດຮວມຫຼາຍໝື່ນຄົນ.

ຕອນບ່າຍ: ມີການຊ່ວງຕີຄີລະຫວ່າງຝ່າຍປະຊາຊົນ(ແນວໂຮມບ້ານ ເມືອງ) ກັບຝ່າຍບໍລິຫານ(ພະນັກງານລັດຖະກອນ) ຖືວ່າ ກິລານີ້ ສືບ ທອດມາແຕ່ ປະເພນີເກົ່າ.

ຕອນຄ່ຳ: ວຽນທຽນບູຊາພຣະທາດ ແລະຈູດບັ້ງໄຟດອກ

ນອກຈາກ ພິທີທາງສາສະໜານີ້ແລ້ວ ກໍມີການຄົບງັນອອກຮ້ານສິນຄ້າ ທີ່ດຳເນີນຂຶ້ນກ່ອນມື້ບຸນຫຼາຍມື້ແລະແກ່ຍາວຂະຫຍາຍວົງອອກໄປຫາສູນການ ຄ້າລາວໄອເຕັກ.

(ຂໍ້ມູນ ໂດຍນາງ ສຸດຊາດາ ເຕໂຊ)